# ພຣະທັມເຮັບເຣີ



| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | |



ຈົດຫມາຍທີ່ມີໄປເຖິງຄຣິສຕະສາສນິກກະຊົນຊາວ

The Letter to the

## ເຮັບເຣີ

## HEBERWS

### 1 ພຣະເຈົ້າຊົງກ່າວທາງພຣະບຸດຂອງພຣະອົງ

God Has Spoken by His Son

(ຢຮ 1:1-4)

1 ໃນສມັຍກ່ອນພຣະເຈົ້າໄດ້ຊົງກ່າວຫລາຍເທື່ອດ້ວຍວິທີຕ່າງໆ ແກ່ບັນພະບຸຣຸດຂອງເຮົາທັງຫລາຍທາງພວກຜູ້ປະ
ກາດພຣະທັມ

2 ແຕ່ໃນຄາວສຸດທ້າຍນີ້ ພຣະອົງໄດ້ຊົງກ່າວແກ່ເຮົາທັງຫລາຍທາງພຣະບຸດ ຜູ້ຊຶ່ງພຣະອົງໄດ້ຊົງຕັ້ງໃຫ້ເປັນຜູ້ຮັບສັພສິ່ງ
ທັງປວງເປັນມໍຣະດົກ ແລະດ້ວຍພຣະບຸດນັ້ນພຣະອົງໄດ້ຊົງສ້າງໂລກທັງຫລາຍ

3 ພຣະບຸດນັ້ນເປັນແສງສະທ້ອນພຣະສະງ່າຣາສີຂອງພຣະເຈົ້າ ແລະມີສະພາບເປັນແບບພິມດຽວກັນກັບພຣະອົງ ແລະ
ຊົງຄ້ຳຊູພິພົບໂລກໄວ້ດ້ວຍພຣະວັຈນະອັນຊົງຣິດຂອງພຣະອົງ ເມື່ອພຣະອົງຊົງຊຳຣະຄວາມຜິດບາບແລ້ວ ກໍຊົງປະ
ທັບຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບໃນບ່ອນສູງ

4 ອັນນຶ່ງ, ພຣະເຈົ້າໄດ້ຊົງປະທານນາມຍົດອັນປະເສີດເລີດລ້ຳກວ່າເທວະດາໃຫ້ພຣະອົງຢ່າງໃດ ພຣະອົງກໍຊົງເກີດ
ເປັນຜູ້ປະເສີດເລີດລ້ຳກວ່າເທວະດາຢ່າງນັ້ນ

### ພຣະບຸດຊົງເປັນຜູ້ປະເສີດເລີດລ້ຳກວ່າເທວະດາ

The Son Is Superior to Angels

5 ເພາະວ່າມີຕົນໃດແດ່ໃນບັນດາເທວະດາທີ່ພຣະເຈົ້າໄດ້ຊົງກ່າວວ່າ, "ທ່ານເປັນບຸດຂອງເຮົາ ວັນນີ້ເຮົາໄດ້ໃຫ້ກຳເນີດ
ແດ່ທ່ານ" ຫລືຊົງກ່າວອີກວ່າ, "ເຮົາຈະເປັນບິດາຂອງທ່ານ ແລະທ່ານຈະເປັນບຸດຂອງເຮົາ"

6 ແລະອີກເທື່ອນຶ່ງ, ເມື່ອພຣະອົງຊົງນຳພຣະບຸດອົງກົກເຂົ້າມາໃນໂລກ ກໍຊົງກ່າວວ່າ, "ໃຫ້ບັນດາເທວະດາຂອງພຣະ
ເຈົ້າຂາບໄຫວ້ທ່ານ"

7 ສ່ວນເທວະດາເຫລົ່ານັ້ນພຣະອົງຊົງກ່າວວ່າ, "ພຣະອົງຊົງບັນດານໃຫ້ເທວະດາຂອງພຣະອົງເປັນເໝືອນລົມ ແລະຊົງ
ບັນດານໃຫ້ພວກຜູ້ຮັບໃຊ້ຂອງພຣະອົງເປັນເໝືອນແປວໄຟ"

8 ແຕ່ສ່ວນພຣະບຸດນັ້ນພຣະອົງຊົງກ່າວວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຣາຊບັນລັງຂອງພຣະອົງກໍຕັ້ງຢູ່ເປັນນິດຕລອດໄປ
ພຣະຄະທາແຫ່ງຣາຊອານາຈັກຂອງພຣະອົງ ກໍເປັນພຣະຄະທາອັນທ່ຽງທັມ

9 ພຣະອົງຊົງຮັກຄວາມຊອບທັມ ແລະຊົງກຽດຊັງຄວາມອະທັມ ເພາະສັນນັ້ນພຣະເຈົ້າ ຄືພຣະເຈົ້າຂອງພຣະອົງໄດ້ຊົງ
ຫົດສົງພຣະອົງໄວ້ ດ້ວຍນ້ຳມັນແຫ່ງຄວາມຍິນດີ ຫລາຍກວ່າພຣະສະຫາຍທັງປວງຂອງພຣະອົງ

10 ແລະ, “ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຕົ້ນເດີມພຣະອົງຊົງວາງຮາກແຜ່ນດິນໂລກໄວ້ ແລະຟ້າສວັນເປັນກິຈການ
ແຫ່ງພຣະຫັດຂອງພຣະອົງ
11 ສິ່ງເຫລົ່ານີ້ຈະດັບສູນໄປ ແຕ່ພຣະອົງຊົງດຳຣົງຢູ່ ສິ່ງເຫລົ່ານີ້ຈະເກົ່າແກ່ໄປໝົດເໝືອນດັ່ງເຄື່ອງນຸ່ງຫົ່ມ
12 ພຣະອົງຈະຊົງມ້ວນສິ່ງເຫລົ່ານີ້ໄວ້ເໝືອນດັ່ງມ້ວນເສື້ອຄຸມ (ຄືມ້ວນເສື້ອໃຫຍ່) ແລະສິ່ງເຫລົ່ານີ້ຈະປ່ຽນແປງໄປ
ແຕ່ຝ່າຍພຣະອົງຍັງຊົງເປັນຢ່າງເດີມ ແລະປີເດືອນຂອງພຣະອົງຈະບໍ່ສິ້ນສຸດ”
13 ນອກຈາກນັ້ນພຣະອົງຊົງເຄີຍກ່າວແກ່ເທວະດາຕົນໃດວ່າ, “ຈົ່ງນັ່ງເບື້ອງຂວາມືຂອງເຮົາ ຈົນກວ່າເຮົາຈະປາບສັດ
ຕຣູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ”
14 ຝູງເທວະດາທັງປວງນັ້ນ ແມ່ນວິນຍານຮັບໃຊ້ທີ່ພຣະເຈົ້າຊົງໃຊ້ມາປົວລະບັດບັນດາຜູ້ທີ່ຈະໄດ້ຮັບຄວາມລອດ
ພົ້ນເປັນມໍຣະດົກ ບໍ່ແມ່ນຫລື

## 2 ຄວາມລອດພົ້ນອັນໃຫຍ່ຫລວງ

Warning to Pay Attention

1 ເຫດສັນນັ້ນພວກເຮົາຄວນເອົາໃຈໃສ່ ໃນຂໍ້ຄວາມທີ່ພວກເຮົາໄດ້ຍິນໄດ້ຟັງນັ້ນໃຫ້ຫລາຍຂຶ້ນອີກ ຢ້ານວ່າພວກ
ເຮົາຈະລ່ອງກາຍໄປຈາກຂໍ້ຄວາມເຫລົ່ານັ້ນ
2 ດ້ວຍວ່າເມື່ອຖ້ອຍຄຳຊຶ່ງເທວະດາໄດ້ກ່າວນັ້ນປາກົດເປັນຈິງ ແລະການລ່ວງລະເມີດກັບການບໍ່ເຊື່ອຟັງທຸກຢ່າງໄດ້
ຮັບຜົນຕອບສນອງຕາມຄວາມຍຸດຕິທັມແລ້ວ
3 ດັ່ງນັ້ນ, ຖ້າພວກເຮົາລະເລີຍຕໍ່ຄວາມລອດພົ້ນອັນໃຫຍ່ຫລວງນີ້ ພວກເຮົາຈະໜີພົ້ນໄປໄດ້ຢ່າງໃດ ຄວາມພົ້ນນັ້ນອົງ
ພຣະຜູ້ເປັນເຈົ້າໄດ້ຊົງປະກາດໃນເວລາທີ່ວທີ ແລະບັນດາຜູ້ທີ່ໄດ້ຍິນກໍຢືນຢັນແກ່ພວກເຮົາວ່າເປັນຄວາມຈິງ
4 ທັງນີ້ພຣະເຈົ້າກໍຊົງເປັນພຍານຮ່ວມກັນກັບເຂົາ ໂດຍຊົງສະແດງໝາຍສຳຄັນ ການອັສຈັນ ການອິດທິຣິດຕ່າງໆ ແລະ
ໂດຍຂອງປະທານຈາກພຣະວິນຍານບໍຣິສຸດ ຊຶ່ງຊົງປະທານຕາມນໍ້າພຣະທັຍຂອງພຣະອົງ

### ຜູ້ນຳໄປສູ່ຄວາມພົ້ນ

Exaltation through Abasement

(ພສສ 8:1-9)

5 ເພາະວ່າໂລກໜ້າທີ່ເຮົາກ່າວເຖິງນັ້ນ ພຣະອົງບໍ່ໄດ້ຊົງມອບໃຫ້ຢູ່ໃຕ້ບັງຄັບຝູງເທວະດາ,
6 ແຕ່ໃນບ່ອນນຶ່ງມີຄຳກ່າວເປັນພຍານວ່າ, “ມະນຸດເປັນຜູ້ໃດທີ່ເຈົ້າຈະຊົງລະນຶກເຖິງ ຫລືມະນຸດເປັນຜູ້ໃດທີ່ຈະຊົງຫ່ວງ
ໃຍ
7 ພຣະອົງເຈົ້າຊົງບັນດານໃຫ້ມະນຸດນັ້ນຕໍ່າກວ່າເທວະດາພຽງລະຍະນຶ່ງ ແລະຊົງເອົາສະງ່າຣາສີກັບຍົດສັກເປັນພວງ
ມາລັຍມາສວມໃຫ້
8 ພຣະອົງເຈົ້າຊົງມອບສິ່ງທັງປວງໃຫ້ຢູ່ພາຍໃຕ້ຕີນຂອງທ່ານ” ໃນການທີ່ພຣະອົງມອບສິ່ງທັງປວງໃຫ້ຢູ່ໃຕ້ອຳນາດຂອງ
ທ່ານນັ້ນ ບໍ່ມີສິ່ງໃດທີ່ຊົງປະໄວ້ນອກເໜືອຈາກອຳນາດຂອງທ່ານ ແຕ່ບັດນີ້ພວກເຮົາຍັງບໍ່ເຫັນວ່າສິ່ງທັງປວງຢູ່ໃຕ້ອຳ
ນາດຂອງທ່ານ
9 ແຕ່ພວກເຮົາກໍເຫັນພຣະເຢຊູ ຜູ້ຊຶ່ງພຣະອົງຊົງບັນດານໃຫ້ຕໍ່າກວ່າເທວະດາພຽງລະຍະນຶ່ງນັ້ນ ໄດ້ຊົງຮັບພຣະສະງ່າ
ຣາສີແລະພຣະກຽດເປັນພວງມາລັຍ ເພາະທີ່ພຣະອົງຊົງສິ້ນພຣະຊົນດ້ວຍຄວາມທໍຣະມານ ທັງນີ້, ໂດຍພຣະຄຸນ
ຂອງພຣະເຈົ້າ ພຣະອົງຈຶ່ງໄດ້ຊົງຊີມຣົດຄວາມຕາຍແທນມະນຸດທຸກຄົນ

10 ດ້ວຍວ່າ ໃນການທີ່ພຣະເຈົ້າຈະຊົງພາບຸດຫລວງຫລາຍໄປສູ່ສະງ່າຣາສີນັ້ນ ກໍເປັນການເໝາະສົມຢູ່ແລ້ວທີ່ພຣະ
ເຈົ້າຜູ້ຊຶ່ງທຸກສິ່ງດໍາຣົງຢູ່ໂດຍພຣະອົງແລະເພື່ອພຣະອົງຈະຊົງໃຫ້ຜູ້ນໍາທາງຄວາມລອດພົ້ນໃຫ້ເຂົາເຫລົ່ານັ້ນ ໃຫ້
ເຖິງທີ່ສໍາເຣັດໂດຍການທົນທຸກທໍຣະມານ
11 ເພາະວ່າທັງຜູ້ທີ່ຊໍາຣະໃຫ້ບໍຣິສຸດແລະຄົນເຫລົ່ານັ້ນທີ່ຖືກຊໍາຣະໃຫ້ບໍຣິສຸດກໍມາຈາກບ່ອນດຽວກັນ ເພາະສັນນັ້ນພຣະ
ອົງຈຶ່ງບໍ່ຊົງລະອາຍໃນການທີ່ຈະຊົງເອີ້ນເຂົາເຫລົ່ານັ້ນວ່າເປັນ "ອ້າຍນ້ອງ"
12 ດັ່ງທີ່ພຣະອົງຊົງກ່າວວ່າ, "ເຮົາຈະປະກາດພຣະນາມຂອງພຣະອົງແກ່ອ້າຍນ້ອງຂອງເຮົາ ເຮົາຈະຮ້ອງເພງສັຣເສີນ
ພຣະອົງໃນຖ້າມກາງຊຸມນຸມຊົນ"
13 ແລະຊົງກ່າວອີກວ່າ, "ຝ່າຍເຮົາ, ເຮົາກໍວາງໃຈໃນພຣະອົງ" ທັງຊົງກ່າວອີກວ່າ, "ນີ້ແຫລະ, ຕົວເຮົາກັບບຸດທັງຫລາຍທີ່
ພຣະເຈົ້າໄດ້ຊົງປະທານແກ່ເຮົານັ້ນ"
14 ເຫດສັນນັ້ນ, ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເໝືອນກັນ
ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທໍາລາຍຜູ້ທີ່ມີອໍານາດແຫ່ງຄວາມຕາຍ ຄືພຍາມານ
15 ແລະຈະໄດ້ຊົງປ່ອຍຄົນທັງປວງທີ່ເປັນຂ້ອຍຂ້າຍ້ອນຢ້ານຄວາມຕາຍຕລອດຊີວິດນັ້ນ ໃຫ້ລອດພົ້ນ
16 ຈິງແທ້, ພຣະອົງບໍ່ໄດ້ຊົງເປັນຫ່ວງພວກເທວະດາ ແຕ່ຊົງເປັນຫ່ວງເຊື້ອສາຍຂອງອັບຣາຮາມ
17 ເຫດສັນນັ້ນພຣະອົງຈຶ່ງຊົງຕ້ອງການເປັນເໝືອນອ້າຍນ້ອງຂອງຕົນທຸກຢ່າງ ເພື່ອວ່າພຣະອົງຈະໄດ້ຊົງເປັນມະຫາປະ
ໂຣຫິດຜູ້ປະກອບດ້ວຍເມດຕາແລະຄວາມສັດຊື່ໃນການງານທຸກຢ່າງທີ່ກ່ຽວກັບພຣະເຈົ້າ ເພື່ອໃຊ້ແທນຄວາມຜິດ
ບາບຂອງພົລເມືອງ
18 ເພາະເຫດທີ່ພຣະອົງເອງໄດ້ຊົງທົນທຸກທໍຣະມານແລະຖືກທົດລອງ ພຣະອົງຈຶ່ງຊົງສາມາດຊ່ອຍຜູ້ທີ່ກໍາລັງຖືກທົດລອງ
ນັ້ນໄດ້

## 3 ພຣະເຢຊູຊົງເປັນໃຫຍ່ກວ່າໂມເຊ

Mosses a Servant, Christ a Son

1 ເພາະສັນນັ້ນ, ພີ່ນ້ອງຜູ້ບໍຣິສຸດແລະຜູ້ເຂົ້າສ່ວນໃນການທີ່ພຣະເຈົ້າຊົງເອີ້ນມາດ້ວຍກັນກັບເຮົາເອີຍ ຈົ່ງຄຶດເຖິງອັຄສາ
ວົກແລະມະຫາປະໂຣຫິດຂອງ
ພຣະສາສນາທີ່ເຮົາຮັບເຊື່ອນັ້ນ ຄືພຣະເຢຊູ
2 ພຣະອົງຊົງສັດຊື່ຕໍ່ພຣະເຈົ້າຜູ້ຊົງແຕ່ງຕັ້ງພຣະອົງໄວ້ ເຫມືອນຢ່າງໂມເຊໄດ້ສັດຊື່ຖ້າມກາງຍາດວົງທັງຫມົດ ອັນເປັນ
ຄົວເຮືອນຂອງພຣະເຈົ້າ
3 ເພາະສົມຄວນຢູ່ແລ້ວທີ່ພຣະອົງນີ້ມີພຣະກຽດຫລາຍກວ່າໂມເຊ ເຫມືອນດັ່ງກົກເຄົ້າຍາດວົງມີກຽດຫລາຍຍາດວົງ
4 ດ້ວຍວ່າທຸກຍາດວົງກໍມີກົກເຄົ້າ ແຕ່ຜູ້ຊົງເປັນກົກເຄົ້າຂອງສັພສິ່ງທັງປວງນັ້ນແມ່ນພຣະເຈົ້າ
5 ໃນຍາດວົງທັງຫມົດອັນເປັນຄົວເຮືອນຂອງພຣະເຈົ້ານັ້ນ ໂມເຊໄດ້ສັດຊື່ໃນຖານະເປັນຜູ້ຮັບໃຊ້ ເພື່ອເປັນພຍານໃນ
ເຣື່ອງຕ່າງໆຊຶ່ງພຣະເຈົ້າຈະຊົງກ່າວຕໍ່ໄປ
6 ແຕ່ຝ່າຍພຣະຄຣິດກໍຊົງສັດຊື່ໃນຖານະເປັນພຣະບຸດຢູ່ເຫນືອຍາດວົງ ອັນເປັນຄົວເຮືອນຂອງພຣະເຈົ້າ ແລະເຮົາທັງ
ຫລາຍກໍເປັນຄົວເຮືອນນັ້ນແຫລະ, ຖ້າຫາກເຮົາຍຶດຖືເອົາຄວາມກ້າຫານແລະຄວາມພູມໃຈໃນຄວາມຫວັງນັ້ນໄວ້
(ໃຫ້ຫມັ້ນຄົງຈະເຖິງທີ່ສຸດ)

**ສະບາໂຕທີ່ພັກເຊົາສໍາລັບພົລເມືອງຂອງພຣະເຈົ້າ**

Warning Against Unbelief

(ພສສ 95:7-11)

7 ເຫດສັນນັ້ນຕາມທີ່ພຣະວິນຍານໄດ້ຊົງກ່າວໄວ້ວ່າ, "ວັນນີ້, ຖ້າທ່ານທັງຫລາຍໄດ້ຍິນພຣະສຸຣະສຽງຂອງພຣະອົງ

8 ຢ່າໃຫ້ໃຈຂອງພວກທ່ານແຂງກະດ້າງໄປເໝືອນຢ່າງໃນຄາວຄັດຄ້ານ ຄືເວລາມີການທົດລອງໃນປ່າ
9 ທີ່ນັ້ນບັນພະບຸຣຸດຂອງພວກທ່ານໄດ້ທົດລອງເຮົາໂດຍໄດ້ເອົາເຮົາເຂົ້າພິສູດ ເຖິງແມ່ນວ່າເຂົາໄດ້
ເຫັນການກະທຳຂອງເຮົາຕລອດສີ່ສິບປີ
10 ເພາະເຫດນັ້ນເຮົາຈຶ່ງເຄືອງໃຈກັບຄົນສມັຍນັ້ນ ແລະເວົ້າວ່າ “ໃຈຂອງເຂົາມັກຫລົງຜິດຢູ່ສເມີ ເຂົາບໍ່ຮູ້ຈັກທັນທາງ
ຂອງເຮົາ”
11 ຕາມທີ່ເຮົາໄດ້ສາບານດ້ວຍຄວາມເຄືອງໃຈວ່າ, “ເຂົາຈະບໍ່ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກເທື່ອ”
12 ພີ່ນ້ອງທັງຫລາຍ, ຈົ່ງລະວັງໃຫ້ດີ ເພາະຢ້ານວ່າຈະມີຜູ້ໃດຜູ້ນຶ່ງໃນພວກທ່ານມີໃຈຊົ່ວແລະບໍ່ເຊື່ອ ຄືໃຈປະຖິ້ມພຣະ
ເຈົ້າຜູ້ຊົງພຣະຊົນຢູ່
13 ແຕ່ຈົ່ງເຕືອນສະຕິກັນແລະກັນທຸກວັນຕລອດເວລາທີ່ຍັງເອີ້ນໄດ້ວ່າ “ວັນນີ້” ເພື່ອວ່າຈະບໍ່ມີຜູ້ໃດໃນພວກທ່ານມີໃຈ
ແຂງກະດ້າງໄປ ເພາະກົນອຸບາຍແຫ່ງຄວາມບາບ
14 ເພາະວ່າພວກເຮົາໄດ້ເກີດເປັນຜູ້ມີສ່ວນຮ່ວມກັບພຣະຄຣິດ ຖ້າເຮົາຍຶດຖືເອົາຄວາມໄວ້ວາງໃຈທີ່ເຮົາມີຢູ່ໃນຕອນຕົ້ນ
ນັ້ນໄວ້ໃຫ້ໝັ້ນຄົງຈະເຖິງທີ່ສຸດ
15 ເມື່ອມີຄຳກ່າວໄວ້ວ່າ, “(ວັນນີ້) ຖ້າທ່ານທັງຫລາຍໄດ້ຍິນພຣະສຸຣະສຽງຂອງພຣະອົງ ຢ່າໃຫ້ໃຈຂອງພວກທ່ານແຂງ
ກະດ້າງໄປ ເໝືອນຢ່າງໃນຄາວການຄັດຄ້ານນັ້ນ”
16 ແມ່ນໃຜໜໍ ທີ່ໄດ້ຍິນແລ້ວແຕ່ຍັງໄດ້ຄັດຄ້ານ ບໍ່ແມ່ນຄົນທັງປວງທີ່ໂມເຊໄດ້ນຳອອກມາຈາກປະເທດເອຢິບນັ້ນຫລື
17 ແລະແມ່ນໃຜໜໍ ທີ່ພຣະອົງໄດ້ຊົງເຄືອງພຣະທັຍຕລອດສີ່ສິບປີ ກໍແມ່ນຄົນເຫລົ່ານັ້ນທີ່ໄດ້ເຮັດບາບ ແລະຊາກສົບ
ຂອງເຂົາໄດ້ຕົກຢູ່ໃນປ່າ ບໍ່ແມ່ນຫລື
18 ແລະແກ່ໃຜໜໍ ທີ່ພຣະອົງໄດ້ຊົງສາບານຕົວວ່າ ເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງພຣະອົງຈັກເທື່ອ ກໍແມ່ນຄົນ
ທີ່ບໍ່ເຊື່ອຟັງເຫລົ່ານັ້ນ ບໍ່ແມ່ນຫລື
19 ດັ່ງນັ້ນພວກເຮົາຈຶ່ງເຫັນວ່າ ເພາະຄວາມບໍ່ເຊື່ອຟັງ ເຂົາຈຶ່ງເຂົ້າໄປບໍ່ໄດ້

## 4

### The Rest That God Promised

1 ເຫດສັນນັ້ນ, ເມື່ອພຣະສັນຍາຍັງມີຢູ່ວ່າ ຈະໃຫ້ພວກເຮົາເຂົ້າຮ່ວມບ່ອນພັກເຊົາຂອງພຣະອົງ ກໍໃຫ້ເຮົາທັງຫລາຍຢຳ
ເກງ ເພາະຢ້ານຈະມີຜູ້ນຶ່ງຜູ້ໃດໃນພວກທ່ານໄປບໍ່ເຖິງ
2 ເພາະວ່າພວກເຮົາໄດ້ຍິນຂ່າວປະເສີດຢ່າງດຽວກັນກັບເຂົາ ແຕ່ວ່າເຂົາບໍ່ໄດ້ຮັບປໂຍດຈາກຂ່າວປະເສີດນັ້ນ ເພາະ
ເຂົາບໍ່ໄດ້ຮັບດ້ວຍຄວາມເຊື່ອ
3 ສຳລັບເຮົາທັງຫລາຍຜູ້ມີຄວາມເຊື່ອແລ້ວ ຈະໄດ້ເຂົ້າຮ່ວມບ່ອນພັກເຊົາຕາມເຣື່ອງທີ່ພຣະອົງຊົງກ່າວໄວ້ແລ້ວວ່າ,
“ເຮົາຈຶ່ງສາບານດ້ວຍຄວາມເຄືອງໃຈວ່າ ເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກເທື່ອ”
4 ເຖິງແມ່ນວ່າງານຂອງພຣະອົງຈະສຳເຣັດແລ້ວຕັ້ງແຕ່ສ້າງໂລກ ແລະມີບ່ອນນຶ່ງທີ່ໄດ້ກ່າວເຖິງວັນຖ້ອນເຈັດດັ່ງນີ້ວ່າ,
“ໃນວັນຖ້ອນເຈັດພຣະເຈົ້າໄດ້ຊົງຢຸດພັກການງານທັງສິ້ນຂອງພຣະອົງ”
5 ແລະໃນບ່ອນນັ້ນມີຄຳວ່າ, “ເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກເທື່ອ”
6 ທີ່ຈິງ, ຍັງມີລາງຄົນທີ່ຈະເຂົ້າຮ່ວມບ່ອນນັ້ນ ແຕ່ຄົນເຫລົ່ານັ້ນທີ່ໄດ້ຍິນຂ່າວປະເສີດຄາວກ່ອນບໍ່ໄດ້ເຂົ້າເພາະເຂົາບໍ່
ເຊື່ອຟັງ
7 ດັ່ງນັ້ນ ພຣະອົງໄດ້ຊົງກຳນົດໄວ້ອີກວັນນຶ່ງຄື “ວັນນີ້” ຕາມທີ່ພຣະອົງໄດ້ຊົງກ່າວໄວ້ທາງດາວິດໃນເວລາຕໍ່ມາເຫິງນານ
ເໝືອນໄດ້ອ້າງມາແລ້ວວ່າ, “ວັນນີ້, ຖ້າທ່ານທັງຫລາຍໄດ້ຍິນພຣະສຸຣະສຽງຂອງພຣະອົງ ຢ່າໃຫ້ໃຈຂອງພວກທ່ານ
ແຂງກະດ້າງໄປ”

8 ເພາະວ່າຖ້າໂຢຊວຍໄດ້ພາເຂົາເຂົ້າໄປສູ່ບ່ອນພັກນັ້ນແລ້ວ ພຣະເຈົ້າກໍຄົງບໍ່ໄດ້ຊົງກ່າວໃນພາຍຫລັງເຖິງວັນອື່ນອີກ
9 ເຫດສັນນີ້ ຍັງມີວັນພັກເຊົາ ຄືວັນຊະບາໂຕ ສໍາລັບພົລເມືອງຂອງພຣະເຈົ້າ
10 ເພາະວ່າຜູ້ໃດທີ່ເຂົ້າຮ່ວມບ່ອນພັກເຊົາຂອງພຣະເຈົ້າແລ້ວ ກໍໄດ້ພັກການງານຂອງຕົນເໝືອນພຣະເຈົ້າໄດ້ຊົງພັກພຣະ
ຣາຊກິດຂອງພຣະອົງ
11 ເຫດສັນນັ້ນ ເຮົາທັງຫລາຍຈົ່ງອົດສາພຍາຍາມ ໃຫ້ໄດ້ເຂົ້າສູ່ບ່ອນພັກເຊົານັ້ນ ເພື່ອຈະບໍ່ໃຫ້ຜູ້ນຶ່ງຜູ້ໃດຫລົງໄປເໝືອນ
ຄົນບໍ່ເຊື່ອຟັງເຫລົ່ານັ້ນ
12 ເພາະວ່າພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ ຄົມກວ່າດາບສອງຄົມທຸກດວງແທງຊອດເຖິງຈິດ
ໃຈແລະວິນຍານຕລອດທັງຄໍ່ກະດູກແລະໄຂໃນກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດແລະຄວາມມຸ້ງໝາຍໃນໃຈ
ໄດ້
13 ໃນທຸກສິ່ງທີ່ສ້າງຂຶ້ນນັ້ນ ບໍ່ມີສິ່ງໃດບັງລັບໄວ້ຈາກພຣະພັກຂອງພຣະອົງ ແຕ່ທຸກສິ່ງໄດ້ປາກົດແຈ້ງຕໍ່ພຣະເນດຂອງ
ພຣະອົງ ຜູ້ທີ່ເຮົາຈະຕ້ອງໃຫ້ການນັ້ນ

Jesus the Great High Priest

14 ເຫດສັນນັ້ນ ຄັນພວກເຮົາມີມະຫາປະໂຣຫິດຜູ້ໃຫຍ່ທີ່ຜ່ານຟ້າສວັນໄປແລ້ວ ຄືພຣະເຢຊູພຣະບຸດຂອງພຣະເຈົ້າ ຂໍ
ໃຫ້ພວກເຮົາຍຶດຖືຄວາມເຊື່ອທີ່ເຮົາໄດ້ປະກາດແລ້ວນັ້ນໃຫ້ໝັ້ນຄົງ
15 ເພາະວ່າພວກເຮົາບໍ່ໄດ້ມີມະຫາປະໂຣຫິດທີ່ບໍ່ສາມາດຈະເຫັນໃຈໃນຄວາມອ່ອນແອຂອງພວກເຮົາ ເຖິງປານນັ້ນ
ພຣະອົງກໍຍັງບໍ່ມີບາບ
16 ເຫດສັນນັ້ນ ໃຫ້ເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນ ເພື່ອພວກເຮົາຈະໄດ້ຮັບພຣະເມດຕາ
ແລະພົບພຣະຄຸນທີ່ຈະຊ່ອຍເຮົາໃນເວລາທີ່ຕ້ອງການ

# 5

Chapter 5

1 ຝ່າຍມະຫາປະໂຣຫິດທຸກຕົນກໍຖືກເລືອກໄວ້ຈາກມະນຸດ ແລະແຕ່ງຕັ້ງໃຫ້ກະທໍາບັນດາກິຈການທີ່ກ່ຽວກັບພຣະເຈົ້າ
ແທນມະນຸດ ຄືນໍາຂອງປະທານແລະເຄື່ອງບູຊາມາຖວາຍເພື່ອລຶບລ້າງການຜິດບາບ
2 ທ່ານສະແດງໃຈອົດທົນດົນນານຕໍ່ຄົນໂງ່ແລະຄົນຫລົງຜິດໄດ້ ເພາະທ່ານເອງກໍມີຄວາມອ່ອນແອລ້ອມຢູ່ເໝືອນກັນ
3 ເພາະເຫດນີ້ທ່ານຈຶ່ງຕ້ອງຖວາຍເຄື່ອງບູຊາເພື່ອລຶບລ້າງການຜິດບາບ ທັງເພື່ອຕົວເອງແລະເພື່ອພົລເມືອງເຫມືອນກັນ
4 ບໍ່ຫ່ອນມີຜູ້ໃດຕັ້ງຕົນເອງຢູ່ໃນຕໍາແໜ່ງນີ້ ມີແຕ່ພຣະເຈົ້າຊົງເອີ້ນເອົາເໝືອນຢ່າງຊົງເອີ້ນອາໂຣນນັ້ນ
5 ໃນທໍານອງດຽວກັນ ພຣະຄຣິດກໍບໍ່ໄດ້ຊົງຍົກພຣະອົງເອງຂຶ້ນເປັນມະຫາປະໂຣຫິດ ແຕ່ຊົງຮັບພຣະກຽດນີ້ຈາກພຣະ
ເຈົ້າ ຜູ້ຊົງກ່າວກັບພຣະອົງວ່າ, “ທ່ານນັ້ນແຫລະ, ເປັນບຸດຂອງເຮົາ ຝ່າຍເຮົາ, ເຮົາໃຫ້ກໍາເນີດທ່ານໃນວັນນີ້”
6 ເໝືອນດັ່ງພຣະອົງຊົງກ່າວໄວ້ໃນບ່ອນອື່ນວ່າ, “ທ່ານເປັນປະໂຣຫິດຕລອດໄປ ໃນລໍາດັບດຽວກັບເມນຄີເຊເດັກ”
7 ຝ່າຍພຣະບຸດນັ້ນ, ຂນະເມື່ອຊົງເປັນມະນຸດຢູ່ ພຣະອົງໄດ້ຊົງຖວາຍຄໍາອ້ອນວອນ ແລະໄຫວ້ວອນດ້ວຍການຮ້ອງໄຫ້
ຢ່າງຫນັກ ແລະມີນໍ້າພຣະເນດໄຫລ ທູນຕໍ່ພຣະເຈົ້າຜູ້ຊົງສາມາດໂຜດໃຫ້ພຣະອົງພົ້ນຈາກຕາຍໄດ້ ແລະຊົງສະດັບ
ຮັບຟັງເນື່ອງດ້ວຍຄວາມຢໍາເກງຂອງພຣະອົງ
8 ເຖິງແມ່ນວ່າພຣະອົງຊົງເປັນມະບຸດ ກໍຍັງຊົງຮຽນຮູ້ທີ່ຈະນ້ອມຍອມເຊື່ອຟັງ ໂດຍຄວາມທຸກລໍາບາກທີ່ພຣະອົງໄດ້ຊົງ
ທົນນັ້ນ
9 ເມື່ອພຣະເຈົ້າໄດ້ຊົງບັນດານໃຫ້ພຣະບຸດເຖິງທີ່ສໍາເຣັດແລ້ວ ພຣະບຸດນັ້ນຈຶ່ງໄດ້ເກີດເປັນຕົ້ນກໍາເນີດແຫ່ງຄວາມລອດ
ພົ້ນອັນຕລອດໄປເປັນນິດ ແກ່ຄົນທັງປວງທີ່ເຊື່ອຟັງພຣະອົງ
10 ໂດຍພຣະເຈົ້າໄດ້ຊົງຕັ້ງພຣະອົງໃຫ້ເປັນມະຫາປະໂຣຫິດໃນລໍາດັບດຽວກັບເມນຄີເຊເດັກ

## ການຕັກເຕືອນບໍ່ໃຫ້ຖິ້ມພຣະສາສນາ

Warning against Falling Away

11 ກ່ຽວກັບມະຫາປະໂຣຫິດນັ້ນມີເຣື່ອງເວົ້າຫລາຍ ແລະຍາກທີ່ຈະອະທິບາຍໃຫ້ເຂົ້າໃຈໄດ້ ເພາະວ່າທ່ານທັງ
ຫລາຍກາຍເປັນຄົນຫູໜັກເສັຽແລ້ວ

12 ເຖິງແມ່ນວ່າ ຂນະນີ້ທ່ານທັງຫລາຍຄວນຈະເປັນຄຣູໄດ້ແຕ່ດົນແລ້ວກໍດີ ພວກທ່ານກໍຍັງຕ້ອງການໃຫ້ຄົນອື່ນສອນ
ຫລັກທັມເບື້ອງຕົ້ນແຫ່ງພຣະທັມຂອງພຣະເຈົ້າ ແກ່ພວກທ່ານອີກ ທ່ານທັງຫລາຍກັບກາຍເປັນຄົນຕ້ອງການນ້ຳນົມ
ບໍ່ແມ່ນອາຫານແຂງ

13 ດ້ວຍວ່າທຸກຄົນທີ່ຍັງກິນນ້ຳນົມຢູ່ນັ້ນ ຍັງບໍ່ຊຳນານໃນເຣື່ອງສິນທັມ ເພາະເຂົາຍັງເປັນເດັກນ້ອຍຢູ່

14 ອາຫານແຂງເປັນອາຫານສຳລັບຜູ້ແກ່ແລ້ວ ຄືສຳລັບຜູ້ທີ່ໄດ້ຮັບການຝຶກຫັດອົບຣົມໃຫ້ສາມາດສັງເກດວ່າ ສິ່ງໃດດີ
ແລະສິ່ງໃດຊົ່ວ

# 6

The Peril of Falling Away

1 ເຫດສັນນັ້ນ ໃຫ້ພວກເຮົາປະຫລັກທັມເບື້ອງຕົ້ນຂອງພຣະຄຣິດໄວ້ ແລະກ້າວໜ້າໄປສູ່ຄວາມເປັນຜູ້ແກ່ແລ້ວ ຢ່າ
ເອົາສິ່ງເຫລົ່ານີ້ມາວາງເປັນຮາກຖານຊ້ຳອີກ ຄືການກັບໃຈໃຫມ່ຈາກກິຈການທີ່ນຳໄປສູ່ຄວາມຕາຍ ຄວາມເຊື່ອໃນ
ພຣະເຈົ້າ

2 ແລະຄຳສອນວ່າດ້ວຍພິທີຊຳຣະລ້າງ ພິທີວາງມື ແລະການເປັນຄືນມາຈາກຕາຍ ກັບການພິພາກສາລົງໂທດເປັນນິດ

3 ສິ່ງນີ້ແຫລະ, ພວກເຮົາຈະກະທຳ ຖ້າພຣະເຈົ້າຊົງໂຜດອະນຸຍາດ

4 ເພາະວ່າຄົນເຫລົ່ານັ້ນທີ່ໄດ້ຮັບຄວາມສວ່າງມາເທື່ອນຶ່ງແລ້ວ ແລະຊີມຣົດຂອງປະທານຈາກສວັນ ໄດ້ກາຍເປັນຜູ້ເຂົ້າ
ສ່ວນໃນພຣະວິນຍານບໍຣິສຸດ

5 ແລະໄດ້ຊີມຣົດອັນດີແຫ່ງຖ້ອຍຄຳຂອງພຣະເຈົ້າ ກັບຣິດເດດແຫ່ງຄາວທີ່ຈະມາເຖິງນັ້ນ

6 ຖ້າເຂົາເຫລົ່ານັ້ນໄດ້ຕົກເສັຽໄປແລ້ວ ກໍເຫລືອວິສັຍທີ່ຈະນຳເຂົາມາສູ່ການກັບໃຈອີກໄດ້ ເພາະເຂົາເອງຄຶງພຣະບຸດ
ຂອງພຣະເຈົ້າເສັຽ ແລະເຮັດໃຫ້ພຣະອົງຊົງໄດ້ຮັບການປະຈານຂາຍໜ້າ

7 ດ້ວຍວ່າພື້ນດິນຕອນໃດດູດຮັບເອົານ້ຳຝົນທີ່ຕົກໃສ່ຢູ່ເລື້ອຍ ແລະເກີດພືດຜົນງອກຂຶ້ນໃຫ້ປໂຍດແກ່ຄົນປູກຝັງນັ້ນ ກໍ
ຮັບພຣະພອນຈາກພຣະເຈົ້າ

8 ແຕ່ພື້ນດິນທີ່ເກີດສັຽນໜາມກໍນັບວ່າບໍ່ມີຄ່າ ແລະເກືອບຈະຖືກຊົງປ້ອຍດ່າ ແລ້ວໃນທີ່ສຸດກໍຈະຖືກເຜົາໄຟເສັຽ

9 ແຕ່ພວກທີ່ຮັກເອີຍ, ເຖິງແມ່ນວ່າເຮົາເວົ້າດັ່ງນັ້ນ ເຮົາກໍຍັງເຊື່ອແນ່ວ່າທ່າທີຂອງພວກທ່ານນັ້ນມີສິ່ງດີກວ່າທີ່ໄດ້ກ່າວ
ມານັ້ນກໍຄືສິ່ງທີ່ກ່ຽວກັບຄວາມພົ້ນ

10 ເພາະວ່າພຣະເຈົ້າບໍ່ໄດ້ຊົງອະຍຸດຕິທັມ ຊຶ່ງຈະຊົງລືມການງານທີ່ພວກທ່ານໄດ້ເຮັດ ແລະຄວາມຮັກທີ່ທ່ານໄດ້ສະ
ແດງຕໍ່ພຣະນາມຂອງພຣະອົງ ຄືການຮັບໃຊ້ໄພ່ພົນຂອງພຣະອົງເໝືອນດັ່ງພວກທ່ານຍັງຮັບໃຊ້ຢູ່

11 ດ້ວຍວ່າເຮົາປາຖນາໃຫ້ທ່ານທຸກຄົນສະແດງໃຈຮ້ອນຮົນຢ່າງດຽວກັນຈົນເຖິງທີ່ສຸດ ເພື່ອໃຫ້ຄວາມຫວັງຂອງພວກ
ທ່ານປະສົບຄວາມສຳເຣັດ

12 ເພື່ອຈະບໍ່ໃຫ້ພວກທ່ານກາຍເປັນຄົນເພິກເສີຍ ແຕ່ໃຫ້ຕາມແບບຢ່າງຂອງຄົນເຫລົ່ານັ້ນທີ່ອາສັຍຄວາມເຊື່ອແລະ
ຄວາມພຽນ ຈຶ່ງໄດ້ຮັບມໍຣະດົກຕາມພຣະສັນຍາ

The Certainty of God’s Promise

(ປຖມ 12:1-3)

13 ເມື່ອພຣະເຈົ້າໄດ້ຊົງສັນຍາໄວ້ກັບອັບຣາຮາມນັ້ນ ໂດຍເຫດທີ່ບໍ່ມີໃຜເປັນໃຫຍ່ກວ່າພຣະອົງ ທີ່ພຣະອົງຈະຊົງສາບານ
ດ້ວຍອອກຊື່ຜູ້ນັ້ນໄດ້ ພຣະອົງຈຶ່ງໄດ້ຊົງສາບານດ້ວຍພຣະນາມຂອງພຣະອົງເອງ
14 ວ່າ, "ຈິງແທ້, ເຮົາຈະອວຍພອນໃຫ້ເຈົ້າ ແລະຈະໃຫ້ເຊື້ອສາຍຂອງເຈົ້າທະວີຫລາຍຂຶ້ນ"
15 ຢ່າງນັ້ນແຫລະ, ເມື່ອອັບຣາຮາມໄດ້ທົນຄອຍດ້ວຍຄວາມພຽນແລ້ວ ທ່ານຈຶ່ງໄດ້ຮັບຕາມພຣະສັນຍານັ້ນ
16 ດ້ວຍວ່າຝ່າຍມະນຸດເຄີຍສາບານດ້ວຍອອກຊື່ຜູ້ໃຫຍ່ກວ່າຕົນ ແລະເມື່ອເກີດການຖົກຖຽງກັນຂຶ້ນ ຄຳສາບານນັ້ນກໍ
ເປັນຄຳຢືນຢັນອັນເດັດຂາດ
17 ສັນນັ້ນ ເມື່ອພຣະເຈົ້າຊົງມີພຣະປະສົງຈະຊົງໃຫ້ຜູ້ທີ່ຈະໄດ້ຮັບມໍຣະດົກຕາມ ພຣະສັນຍານັ້ນຮູ້ຈັກຄັກແນ່ຕື່ມຂຶ້ນວ່າ
ພຣະປະສົງຂອງພຣະອົງຈະບໍ່ປ່ຽນແປງຈັກເທື່ອ ພຣະອົງຈຶ່ງຊົງຢືນຢັນພຣະສັນຍານັ້ນ ດ້ວຍຄຳສາບານ
18 ເພື່ອວ່າໂດຍສອງປະການທີ່ປ່ຽນແປງບໍ່ໄດ້ (ໃນສິ່ງນັ້ນພຣະເຈົ້າບໍ່ຊົງສາມາດກ່າວມຸສາໄດ້) ເຮົາ, ຜູ້ທີ່ໄດ້ຫນີພັຍ, ຈຶ່ງ
ຈະໄດ້ຮັບຄວາມຊູໃຈອັນແຮງກ້າໃນການທີ່ຈະຍຶດຖືຄວາມຫວັງຊຶ່ງມີຢູ່ຕໍ່ຫນ້າເຮົານັ້ນ
19 ຄວາມຫວັງທີ່ພວກເຮົາຍຶດຖືນັ້ນເປັນສມໍທີ່ແທ້ຈິງແລະໝັ້ນຄົງຂອງຈິດໃຈ ຄວາມຫວັງນັ້ນນຳໄປສູ່ບ່ອນສັກສິດທີ່ສຸດຢູ່
ເບື້ອງຫລັງຜ້າກັ້ງ
20 ທີ່ພຣະເຢຊູຜູ້ຊົງນຳໜ້າໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນມະຫາປະໂຣຫິດ
ຕລອດໄປໃນລຳດັບດຽວກັບເມນຄີເຊເດັກ

## 7 ເຣື່ອງເມນຄີເຊເດັກ

The Priestly Order of Melchizedek
(ປຖກ 14:17-20)

1 ສ່ວນເມນຄີເຊເດັກຜູ້ນີ້ຄືກະສັດເມືອງຊາເລມ ເປັນປະໂຣຫິດຂອງພຣະເຈົ້າຜູ້ສູງສຸດໄດ້ພົບອັບຣາຮາມ ຂນະທີ່ອັບຣາ
ຮາມກຳລັງກັບມາຈາກການຮົບກັບກະສັດທັງຫລາຍດ້ວຍຊັຍຊະນະ ແລະໄດ້ຊົງອວຍພອນແກ່ທ່ານ
2 ອັບຣາຮາມໄດ້ແບ່ງສິ່ງຂອງທັງໝົດ ເປັນສິບສ່ວນ ເອົາສ່ວນນຶ່ງຖວາຍແກ່ເມນຄີເຊເດັກ ເມນຄີເຊເດັກແປຢ່າງນຶ່ງວ່າ
ກະສັດແຫ່ງຄວາມຊອບທັມ ຕາມຄວາມໝາຍແຫ່ງພຣະນາມຂອງທ່ານ ແລະອີກເປັນກະສັດແຫ່ງສັນຕິສຸກ ຕາມ
ຄວາມຫມາຍຂອງຊື່ເມືອງຊາເລ
3 ບິດາມານດາຫລືເຊື້ອວົງຂອງທ່ານບໍ່ມີກ່າວໄວ້ ວັນຕົ້ນແລະວັນປາຍແຫ່ງຊີວິດຂອງທ່ານກໍບໍ່ມີເໝືອນກັນ ແຕ່ເປັນ
ເໝືອນພຣະບຸດຂອງພຣະເຈົ້າ ຈຶ່ງດຳຣົງຢູ່ເປັນປະໂຣຫິດສືບໆໄປ
4 ຈົ່ງຄຶດເບິ່ງແມ, ວ່າທ່ານຜູ້ນີ້ໃຫຍ່ພໍພຽງໃດ ທີ່ອັບຣາຮາມເປັນຕົ້ນຕະກູນນັ້ນຍັງໄດ້ແບ່ງຊັບຊະເລີຍອັນດີທີ່ສຸດ ເອົານຶ່ງ
ສ່ວນສິບມາຖວາຍແກ່ທ່ານ
5 ແລະບັນດາເຊື້ອສາຍຂອງເລວີ ຜູ້ຊຶ່ງໄດ້ຮັບຕຳແໜ່ງປະໂຣຫິດນັ້ນ ເຖິງແມ່ນວ່າຄົນເຫລົ່ານັ້ນສືບເຊື້ອສາຍມາຈາກ
ອັບຣາຮາມ ກໍຍັງມີພຣະບັນຍັດສັ່ງໃຫ້ຮັບນຶ່ງສ່ວນສິບຈາກພົລເມືອງ ຄືຈາກພວກພີ່ນ້ອງຂອງຕົນ
6 ແຕ່ເມນຄີເຊເດັກຜູ້ນີ້ບໍ່ແມ່ນເຊື້ອສາຍຂອງເຂົາ ກໍຍັງໄດ້ຮັບນຶ່ງສ່ວນສິບຈາກອັບຣາຮາມ ແລະໄດ້ອວຍພອນໃຫ້ອັບ
ຣາຮາມຜູ້ໄດ້ຮັບພຣະສັນຍາຈາກພຣະເຈົ້າ
7 ສິ່ງທີ່ຖຽງບໍ່ໄດ້ກໍຄືຜູ້ນ້ອຍຮັບພອນຈາກຜູ້ໃຫຍ່
8 ອີກປະການນຶ່ງ, ໃນກໍຣະນີປະໂຣຫິດຕະກູນເລວີນັ້ນ ມະນຸດທີ່ຕ້ອງຕາຍກໍເປັນຜູ້ຮັບນຶ່ງສ່ວນສິບ ແຕ່ໃນກໍຣະນີເມນຄີ
ເຊເດັກຜູ້ຮັບນຶ່ງສ່ວນສິບນັ້ນ ມີຫລັກຖານໃນພຣະຄັມພີວ່າທ່ານຍັງມີຊີວິດຢູ່
9 ຖ້າຈະເວົ້າອີກຢ່າງນຶ່ງກໍວ່າເລວີຜູ້ຮັບນຶ່ງສ່ວນສິບນັ້ນ ກໍຍັງໄດ້ຖວາຍນຶ່ງສ່ວນສິບແກ່ເມນຄີເຊເດັກທາງອັບຣາຮາມ
10 ເພາະວ່າໃນຂນະທີ່ເມນຄີເຊເດັກໄດ້ພົບອັບຣາຮາມ ເລວີຍັງຢູ່ໃນສາຍເລືອດຂອງບັນພະບຸຣຸດ ຄືອັບຣາຮາມ

Another Priest, Like Melchizedek

(ພສສ 110:4)

11 ດັ່ງນັ້ນ, ຖ້າພວກປະໂຣຫິດໄດ້ນຳຜົນທີ່ສຳເຣັດແລ້ວ (ດ້ວຍວ່າພົລເມືອງໄດ້ຮັບພຣະບັນຍັດດ້ວຍວິທີນີ້) ເປັນສັນໃດ
ຈຶ່ງຕ້ອງມີປະໂຣຫິດອື່ນອີກ ຕາມລຳດັບດຽວກັບເມນຄີເຊເດັກ ແທນພວກປະໂຣຫິດໃນລຳດັບດຽວກັບອາໂຣນ
12 ເພາະເມື່ອຕຳແໜ່ງປະໂຣຫິດປ່ຽນແປງໄປແລ້ວ ພຣະບັນຍັດກໍຈຳເປັນຕ້ອງປ່ຽນແປງໄປເໝືອນກັນ
13 ເພາະວ່າທ່ານທີ່ເຮົາກ່າວເຖິງນັ້ນກໍມາຈາກຕະກູນອື່ນ ຄືຕະກູນທີ່ຍັງບໍ່ມີຜູ້ໃດເຄີຍປະຕິບັດທີ່ແທ່ນບູຊາຈັກເທື່ອ
14 ເພາະປາກົດແຈ້ງແລ້ວວ່າ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍໄດ້ຊົງສືບເຊື້ອສາຍມາຈາກຕະກູນຢູດາ ແຕ່ເມື່ອໂມ
ເຊໄດ້ກ່າວເຖິງປະໂຣຫິດກໍບໍ່ໄດ້ກ່າວເຖິງຕະກູນນີ້
15 ເຣື່ອງນີ້ກໍປາກົດແຈ້ງຂຶ້ນອີກ ຖ້າມີປະໂຣຫິດອີກຕົນນຶ່ງຕາມແບບຢ່າງເມນຄີເຊເດັກ
16 ຜູ້ຊຶ່ງເປັນປະໂຣຫິດທີ່ບໍ່ໄດ້ຮັບການແຕ່ງຕັ້ງຕາມກົດບັນຍັດຂອງມະນຸດ ແຕ່ໂດຍຣິດເດດແຫ່ງຊີວິດອັນບໍ່ຮູ້ເສື່ອມສູນ
17 ເພາະມີພຍານກ່າວເຖິງທ່ານວ່າ, “ທ່ານເປັນປະໂຣຫິດຕລອດໄປເປັນນິດ ໃນລຳດັບດຽວກັບເມນຄີເຊເດັກ”
18 ດ້ວຍວ່າກົດບັນຍັດທີ່ມີມາກ່ອນນັ້ນໄດ້ຊົງຍົກເລີກເສັຽແລ້ວ ເພາະຂາດຣິດແລະໄຮ້ປໂຍດ
19 (ເພາະວ່າພຣະບັນຍັດນັ້ນບໍ່ໄດ້ທຳໃຫ້ສິ່ງໃດເຖິງທີ່ສຳເຣັດ) ແຕ່ມີຄວາມຫວັງອັນດີກວ່າໄດ້ເພີ້ມເຕີມເຂົ້າມາ ໂດຍ
ຄວາມຫວັງນັ້ນພວກເຮົາຈຶ່ງຈະເຂົ້າໄປໃກ້ພຣະເຈົ້າໄດ້
20 ການນີ້ໄດ້ບັງເກີດມີມາໂດຍການຊົງສາບານໄວ້ ສ່ວນຄົນອື່ນນັ້ນໄດ້ຖືກແຕ່ງຕັ້ງຂຶ້ນເປັນປະໂຣຫິດໂດຍບໍ່ມີຄວາມສາ
ບານ
21 ແຕ່ທ່ານຜູ້ນີ້ຖືກຊົງແຕ່ງຕັ້ງຂຶ້ນໂດຍໄດ້ຮັບຄວາມສາບານວ່າ, “ອົງພຣະຜູ້ເປັນເຈົ້າໄດ້ຊົງສາບານໄວ້ແລ້ວ ແລະຈະບໍ່
ຊົງປ່ຽນພຣະທັຍວ່າ ທ່ານເປັນປະໂຣຫິດຕລອດໄປ”
22 ດັ່ງນັ້ນ ພຣະເຢຊູຈຶ່ງຊົງກາຍເປັນຜູ້ຮັບປະກັນຄຳສັນຍາອັນດີກວ່າ
23 ພວກປະໂຣຫິດຕະກູນເລວີນັ້ນສືບຕຳແໜ່ງຕໍ່ກັນມາຫລາຍຄົນ ເພາະຄວາມຕາຍຂັດຂວາງເຂົາບໍ່ໃຫ້ປະຕິບັດງານ
ຕລອດໄປ
24 ແຕ່ພຣະເຢຊູນີ້ຊົງດຳຣົງຕຳແໜ່ງປະໂຣຫິດທີ່ບໍ່ສືບຕໍ່ກັນ ເພາະພຣະອົງຊົງດຳຣົງຢູ່ເປັນນິດ
25 ດ້ວຍເຫດນີ້ ພຣະອົງຈຶ່ງຊົງສາມາດເປັນນິດ ທີ່ຈະໂຜດເອົາຄົນທັງປວງທີ່ໄດ້ເຂົ້າມາຫາພຣະເຈົ້າໂດຍທາງພຣະອົງນັ້ນ
ໃຫ້ໄດ້ຮັບຄວາມລອດພົ້ນ ເພາະວ່າພຣະອົງຊົງພຣະຊົນຢູ່ເປັນນິດ ເພື່ອຊ່ອຍທູນຂໍພຣະກະຣຸນາໃຫ້ຄົນເຫລົ່ານັ້ນ
26 ມະຫາປະໂຣຫິດຢ່າງນີ້ແຫລະ, ທີ່ເຫມາະສົມສຳລັບພວກເຮົາ ຄືເປັນຜູ້ບໍຣິສຸດປາສຈາກຜິດ ຫລືສິ່ງຊົ່ວມົວໝອງ
ແຍກຈາກຄົນບາບທັງປວງ ຊົງປະທັບຢູ່ເໜືອມະຫາສວັນ
27 ພຣະອົງບໍ່ຕ້ອງຊົງນຳເຄື່ອງບູຊາມາທຸກໆວັນເໝືອນດັ່ງປະໂຣຫິດຕົນໃຫຍ່ອື່ນໆ ຜູ້ຊຶ່ງຕອນແຣກຖວາຍສຳລັບການ
ຜິດບາບຂອງຕົນເອງ ແລ້ວຈຶ່ງຖວາຍສຳລັບຄວາມຜິດບາບຂອງພົລເມືອງ ສ່ວນພຣະເຢຊູໄດ້ຊົງຖວາຍເຄື່ອງບູຊາ
ພຽງເທື່ອດຽວເປັນການສິ້ນສຸດ ຄືເມື່ອພຣະອົງໄດ້ຊົງນຳພຣະອົງເອງມາຖວາຍ
28 ຝ່າຍພຣະບັນຍັດກໍຮັບມະນຸດທີ່ອ່ອນກຳລັງແຕ່ງຕັ້ງໃຫ້ເປັນມະຫາປະໂຣຫິດ ແຕ່ຄຳສາບານທີ່ຊົງກ່າວໄວ້ພາຍຫລັງ
ພຣະບັນຍັດນັ້ນ ໄດ້ຊົງແຕ່ງຕັ້ງພຣະບຸດຂຶ້ນ ຜູ້ຊຶ່ງເຖິງຄວາມສຳເຣັດເປັນນິດ

## 8 ມະຫາປະໂຣຫິດແຫ່ງພຣະສັນຍາໃໝ່

Mediator of a Better Covenant

(ຢຣມ 31:31-34)

1 ເຣື່ອງທີ່ເຮົາກຳລັງເວົ້າຢູ່ນີ້ມີຂໍ້ສຳຄັນ ຄືພວກເຮົາມີມະຫາປະໂຣຫິດຢ່າງນີ້ ຄືມະຫາປະໂຣຫິດຜູ້ປະທັບຢູ່ເບື້ອງຂວາ
ພຣະທີ່ນັ່ງຂອງຜູ້ຊົງເດຊານຸພາບໃນມະຫາສວັນ

2 ເປັນຜູ້ປົວລະບັດໃນສະຖານທີ່ສັກສິດ ຄືໃນສຳນັກຜ້າອັນແທ້ຈິງ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງຕັ້ງໄວ້ ບໍ່ແມ່ນມະນຸດຕັ້ງ
3 ເພາະວ່າມະຫາປະໂຣຫິດທຸກຕົນໄດ້ຕັ້ງຂຶ້ນເພື່ອໃຫ້ຖວາຍຂອງທານແລະເຄື່ອງບູຊາ ດ້ວຍເຫດນີ້ ຈຶ່ງຈຳເປັນທີ່ມະຫາ
ປະໂຣຫິດຜູ້ນີ້ຈະຕ້ອງມີສິ່ງນຶ່ງສິ່ງໃດຖວາຍເໝືອນກັນ
4 ຖ້າພຣະອົງຊົງຢູ່ໃນໂລກນີ້ ພຣະອົງກໍຈະບໍ່ຊົງເປັນປະໂຣຫິດ ເພາະວ່າມີປະໂຣຫິດທີ່ຖວາຍຂອງທານຕາມພຣະບັນ
ຍັດຢູ່ແລ້ວ
5 ປະການນຶ່ງ, ປະໂຣຫິດເຫລົ່ານັ້ນປົວລະບັດເປັນແຕ່ແບບແລະເງົາແຫ່ງສິ່ງສັກສິດໃນສວັນເໝືອນໂມເຊ, ເມື່ອທ່ານ
ຈະຕັ້ງສຳນັກຜ້ານັ້ນ ພຣະເຈົ້າໄດ້ຊົງເຕືອນສະຕິທ່ານວ່າ, “ດັ່ງນີ້, ເຈົ້າຕ້ອງເຮັດທຸກສິ່ງຕາມແບບຢ່າງທີ່ເຮົາໄດ້ສະ
ແດງແກ່ເຈົ້າເທິງພູນັ້ນ”
6 ແຕ່ພຣະເຢຊູໄດ້ຊົງຮັບພາຣະກິດຊຶ່ງປະເສີດກວ່າຂອງປະໂຣຫິດເຫລົ່ານັ້ນ ເໝືອນດັ່ງພຣະສັນຍາຊຶ່ງພຣະອົງຊົງເປັນ
ຜູ້ກາງນັ້ນກໍປະເສີດກວ່າພຣະສັນຍາເດີມ ເພາະວ່າໄດ້ຊົງຕັ້ງຂຶ້ນໂດຍພຣະສັນຍາທັງຫລາຍອັນປະເສີດກວ່າເກົ່າ
7 ດ້ວຍວ່າຖ້າພຣະສັນຍາເດີມນັ້ນບໍ່ມີຂໍ້ຕິແລ້ວ ກໍບໍ່ຈຳເປັນຊອກພຣະສັນຍາທີສອງມາແທນ
8 ເພາະວ່າພຣະອົງຊົງກ່າວຕິເຂົາວ່າ, “ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ “ເບິ່ງແມ, ພາຍໜ້າຈະມີຄາວນຶ່ງທີ່ເຮົາຈະທຳຄຳ
ສັນຍາໃຫມ່ກັບຍາດວົງອິສຣາເອນແລະຍາດວົງຢູດາ
9 ຈະບໍ່ເໝືອນຄຳສັນຍາຊຶ່ງເຮົາໄດ້ສັນຍາໄວ້ກັບບັນພະບຸຣຸດຂອງເຂົາ ໃນເມື່ອເຮົາໄດ້ຈັບມືຂອງເຂົາພາອອກມາຈາກ
ປະເທດເອຢິບ” ເພາະອົງພຣະຜູ້ເປັນເຈົ້າຊົງກ່າວວ່າ “ເຂົາເຫລົ່ານັ້ນບໍ່ໄດ້ຕັ້ງຢູ່ໃນຄຳສັນຍາຂອງເຮົາ ຝ່າຍເຮົາຈຶ່ງ
ເພີດເສີຍຕໍ່ເຂົາ”
10 ອົງພຣະຜູ້ເປັນເຈົ້າຊົງກ່າວອີກວ່າ, “ນີ້ແມ່ນຄຳສັນຍາ ທີ່ເຮົາຈະສັນຍາໄວ້ກັບຍາດວົງອິສຣາເອນ ພາຍຫລັງສມັຍນັ້ນ
ຄືເຮົາຈະບັນຈຸຂໍ້ບັນຍັດຂອງເຮົາໄວ້ໃນໃຈຂອງເຂົາ ເຮົາຈະຈາຣຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ ເຮົາຈະເປັນ
ພຣະເຈົ້າຂອງເຂົາ ແລະຝ່າຍເຂົາຈະເປັນພົລເມືອງຂອງເຮົາ
11 ເຂົາຈະບໍ່ສອນເພື່ອນບ້ານແລະພີ່ນ້ອງຂອງຕົນແຕ່ລະຄົນວ່າ, “ຈົ່ງຮູ້ຈັກອົງພຣະຜູ້ເປັນເຈົ້າ” ເພາະເຂົາທຸກຄົນຈະຮູ້
ຈັກເຮົາ ຕັ້ງແຕ່ຜູ້ນ້ອຍທີ່ສຸດຈົນເຖິງຜູ້ໃຫຍ່ທີ່ສຸດ
12 ເພາະເຮົາຈະກະຣຸນາຕໍ່ການອະທັມຂອງເຂົາ ແລະການຜິດບາບຂອງເຂົາ ເຮົາຈະບໍ່ຈົດຈຳຕໍ່ໄປ”
13 ເມື່ອພຣະອົງຊົງກ່າວວ່າ, “ຄຳສັນຍາໃໝ່” ກໍເປັນທີ່ເຮັດໃຫ້ຄຳສັນຍາເດີມນັ້ນພົ້ນສມັຍໄປແລ້ວ ສິ່ງທີ່ພົ້ນສມັຍແລະ
ເກົ່າໄປແລ້ວນັ້ນກໍຈວນຈະເສື່ອມສູນໄປ

## 9 ສະຖານອັນສັກສິດທີ່ແຜ່ນດິນໂລກ ແລະທີ່ຟ້າສວັນ

The earthly and the Heavenly sanctuaries

(ອພຍ 25:10-40)

1 ເຖິງແມ່ນຄຳສັນຍາເດີມນັ້ນກໍມີກົດໃນການນະມັສການ ແລະມີສະຖານອັນສັກສິດທີ່ແຜ່ນດິນໂລກ
2 ດ້ວຍວ່າມີສຳນັກຜ້າທີ່ຈັດຕັ້ງຂຶ້ນແລ້ວ ຄືຫ້ອງຊັ້ນນອກຊຶ່ງມີເຄື່ອງຮອງຕີນໂຄມ ມີໂຕະ ແລະມີເຂົ້າຈີ່ທີ່ຕັ້ງຖວາຍໄວ້
ຫ້ອງທຳອິດນີ້ເອີ້ນວ່າສະຖານທີ່ສັກສິດ
3 ພາຍໃນຜ້າກັ້ງຊັ້ນທີສອງມີຫ້ອງຊຶ່ງເອີ້ນວ່າສະຖານທີ່ສັກສິດທີ່ສຸດ
4 ໃນຫ້ອງນັ້ນມີແທ່ນຄຳສຳລັບເຜົາເຄື່ອງຫອມ ມີຫີບຫຸ້ມຫໍ່ດ້ວຍທອງຄຳທຸກດ້ານສຳລັບໃສ່ຄຳສັນຍາ ຢູ່ໃນຫີບນັ້ນມີ
ຂັນຄຳໃສ່ມານາໄວ້ ມີໄມ້ເທົ້າຂອງອາໂຣນທີ່ປົ່ງຍອດ ແລະມີແຜ່ນຫີນຈາຣຶກຄຳສັນຍາແລ້ວ
5 ຢູ່ເທິງຫີບນັ້ນມີຮູບເຊຣູບິມປະກອບດ້ວຍສະງ່າຣາສີອັນຮຸ່ງເຮືອງຂອງພຣະເຈົ້າ ປົກຄຸມພຣະທີ່ນັ່ງອັນຊົງພຣະກະຣຸນາ
ນັ້ນ ສິ່ງເຫລົ່ານີ້ເຮົາຈະພັນລະນາໃຫ້ລະອຽດໃນທີ່ນີ້ບໍ່ໄດ້
6 ເມື່ອຈັດຕັ້ງສິ່ງເຫລົ່ານີ້ໄວ້ຢ່າງນັ້ນແລ້ວ ພວກປະໂຣຫິດກໍເຂົ້າໄປປະກອບພິທີທຸກເວລາໃນຫ້ອງຊັ້ນນອກນັ້ນ

7 แต่ในห้องทีสองນັ້ນມີປະທາປະໂຣຫິດຜູ້ດຽວເທົ່ານັ້ນ ເຂົ້າໄປໄດ້ປີລະເທື່ອ ແຕ່ຕ້ອງນຳເລືອດເຂົ້າໄປຖວາຍເພື່ອ
ຕົນເອງ ແລະເພື່ອຄວາມຜິດໂດຍບໍ່ເຈຕະນາຂອງພົລເມືອງ
8 ຢ່າງນັ້ນພຣະວິນຍານບໍຣິສຸດ ຈຶ່ງຊົງສະແດງວ່າ ທາງທີ່ຈະເຂົ້າໄປໃນສະຖານທີ່ສັກສິດທີ່ສຸດນັ້ນ ຍັງບໍ່ໄດ້ປາກົດໃຫ້
ເຫັນໃນເມື່ອຫ້ອງຕົ້ນນັ້ນຍັງຕັ້ງຢູ່
9 ຫ້ອງຊັ້ນນອກນັ້ນເປັນເຄື່ອງໝາຍເຖິງສມັຍປັດຈຸບັນ ຄືໝາຍຄວາມວ່າການຖວາຍຂອງທານແລະເຄື່ອງບູຊາຕາມ
ແບບນີ້ ຈະຊໍາຮະໃຈສຳນຶກຜິດແລະຊອບຂອງຜູ້ຖວາຍນັ້ນບໍ່ໄດ້
10 ເພາະເປັນເຣື່ອງຂອງກິນ ຂອງດື່ມແລະພິທີຊໍາຮະລ້າງຕ່າງໆເທົ່ານັ້ນ ເປັນພິທີສຳລັບການປະຕິບັດທາງກາຍ ທີ່ໄດ້ຊົງ
ບັນຍັດໄວ້ຈົນກວ່າຈະໄດ້ຊົງປ່ຽນໃໝ່
11 ສ່ວນພຣະຄຣິດ ໄດ້ສະເດັດມາເປັນມະຫາປະໂຣຫິດສຳລັບສິ່ງປະເສີດຊຶ່ງມາເຖິງແລ້ວ ພຣະອົງກໍໄດ້ສະເດັດເຂົ້າໄປ
ໃນສຳນັກອັນໃຫຍ່ແລະປະເສີດກວ່າແຕ່ກ່ອນ (ທີ່ບໍ່ໄດ້ສ້າງຂຶ້ນດ້ວຍມືມະນຸດ ຄືບໍ່ແມ່ນສິ່ງຂອງທີ່ສ້າງຂຶ້ນໃນໂລກນີ້)
12 ພຣະອົງໄດ້ສະເດັດເຂົ້າໄປໃນສະຖານທີ່ສັກສິດທີ່ສຸດພຽງເທື່ອດຽວເປັນການສິ້ນສຸດ ແລະພຣະອົງບໍ່ໄດ້ຊົງນຳເລືອດ
ແບ້ຫລືເລືອດລູກງົວເຂົ້າໄປ ແຕ່ຊົງນຳພຣະໂລຫິດຂອງພຣະອົງເອງເຂົ້າໄປ ແລະຊົງສຳເຣັດການໄຖ່ບາບອັນຕລອດ
ໄປ
13 ເພາະວ່າຖ້າເລືອດແບ້ຫລືເລືອດງົວເຖິກ ແລະຂີ້ເຖົ່າໄຟຂອງລູກງົວໂຕແມ່ທີ່ໂຮຍລົງເທິງຄົນຊົ່ວມົວໝອງຍັງອາດຊໍາ
ຮະຮ່າງກາຍໃຫ້ສະອາດໄດ້
14 ຫລາຍກວ່ານັ້ນຈັກພຽງໃດ ພຣະໂລຫິດຂອງພຣະຄຣິດ ຜູ້ໄດ້ຊົງຖວາຍພຣະອົງເອງແດ່ພຣະເຈົ້າໂດຍພຣະວິນຍານຜູ້
ຊົງຕັ້ງຢູ່ເປັນນິດ ເປັນເຄື່ອງບູຊາປາສຈາກຕໍາໜິ ກໍຈະຊົງຊໍາຮະໃຈສຳນຶກຜິດແລະຊອບຂອງເຮົາທັງຫລາຍ ໃຫ້ພົ້ນ
ຈາກກິຈການທີ່ນຳໄປສູ່ຄວາມຕາຍ ເພື່ອຫັນໄປຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່
15 ເພາະເຫດນັ້ນພຣະອົງຈຶ່ງຊົງເປັນຜູ້ກາງແຫ່ງຄຳສັນຍາໃຫມ່ ເພື່ອໃຫ້ຄົນທັງຫລາຍທີ່ພຣະອົງຊົງເອີ້ນມາ ໄດ້ຮັບມໍຣະ
ດົກຕລອດໄປຕາມທີ່ຊົງສັນຍາໄວ້ ເພາະຄວາມຕາຍນັ້ນໄຖ່ເຂົາໃຫ້ພົ້ນຈາກຜິດບາບທີ່ເກີດໃຕ້ຄໍາສັນຍາເດີມ
16 ເພາະວ່າໃນກໍຣະນີທີ່ກ່ຽວກັບຫນັງສືພິນັຍກັມ ກໍຈະຕ້ອງພິສູດວ່າຜູ້ເຮັດຫນັງສືນັ້ນຕາຍແລ້ວ ຄົນນັ້ນຕ້ອງຕາຍເສັຽ
ກ່ອນ ຫນັງສືພິນັຍກັມຈຶ່ງຈະໃຊ້ໄດ້
17 ເພາະຖ້າຜູ້ທີ່ເຮັດໜັງສືນັ້ນຍັງມີຊີວິດຢູ່ ໜັງສືພິນັຍກັມນັ້ນກໍໃຊ້ບໍ່ໄດ້
18 ເພາະເຫດນັ້ນ, ເຖິງແມ່ນຄໍາສັນຍາເດີມກໍບໍ່ໄດ້ຊົງຕັ້ງຂຶ້ນໂດຍປາສຈາກເລືອດ
19 ເພາະວ່າເມື່ອໂມເຊໄດ້ປະກາດຄໍາສັ່ງທຸກຂໍ້ຕາມພຣະບັນຍັດແກ່ບັນດາພົລເມືອງແລ້ວ ທ່ານກໍເອົາເລືອດລູກງົວ
(ແລະເລືອດແບ້) ກັບນໍ້າ ແລ້ວເອົາຂົນແກະສີແດງແລະຕົ້ນກູສົບ ມາຈຸ່ມຊິດໃສ່ໜັງສືມ້ວນນັ້ນກັບທັງພົລເມືອງທັງ
ປວງ
20 ໂດຍກ່າວວ່າ, “ນີ້ແຫລະ, ຄືເລືອດທີ່ກ່ຽວກັບພຣະສັນຍາຊຶ່ງພຣະເຈົ້າຊົງບັນຍັດໄວ້ແກ່ເຈົ້າທັງຫລາຍ”
21 ໃນທຳນອງດຽວກັນນັ້ນ ທ່ານກໍໄດ້ເອົາເລືອດຊິດໃສ່ສຳນັກຜ້າກັບເຄື່ອງໃຊ້ໃນພິທີນະມັສການທຸກຊະນິດເໝືອນກັນ
22 ແລ້ວຕາມພຣະບັນຍັດນັ້ນ ເກືອບທຸກສິ່ງຕ້ອງຊໍາຮະດ້ວຍເລືອດ ແລະຖ້າບໍ່ມີເລືອດໄຫລອອກແລ້ວການໃຫ້ອະພັຍກໍ
ບໍ່ມີ

## ພຣະເຢຊູຊົງລົບລ້າງບາບໂດຍການຖວາຍຕົນເອງ

Christ’s Sacrifice Takes Away Sin

23 ເຫດສັນນີ້ ສິ່ງຂອງໃນໂລກນີ້ ທີ່ມີແບບຕົວຢ່າງໃນສວັນ ຈຳເປັນຕ້ອງຊໍາຮະໂດຍໃຊ້ເຄື່ອງບູຊາອັນປະເສີດກວ່າອີກ
24 ເພາະວ່າພຣະຄຣິດບໍ່ໄດ້ສະເດັດເຂົ້າໄປໃນສະຖານທີ່ສັກສິດ ຊຶ່ງສ້າງຂຶ້ນດ້ວຍມືມະນຸດຕາມແບບຢ່າງໃນສວັນ ແຕ່
ດຽວນີ້ພຣະອົງໄດ້ສະເດັດເຂົ້າໄປໃນມະຫາສວັນ ເພື່ອເຂົ້າເຝົ້າພຣະເຈົ້າແທນເຮົາທັງຫລາຍ

25 ພຣະອົງບໍ່ຕ້ອງຊົງຖວາຍພຣະອົງເອງເລື້ອຍໆ ບໍ່ເໝືອນມະຫາປະໂຣຫິດທີ່ເຂົ້າໃນສະຖານທີ່ສັກສິດທຸກປີ ແລະນຳ
ເລືອດຊຶ່ງບໍ່ແມ່ນເລືອດຂອງຕົນເອງເຂົ້າໄປຖວາຍ
26 ເພາະຖ້າເປັນຢ່າງນັ້ນ, ພຣະອົງຄົງຈະຕ້ອງຊົງທົນທຸກທໍຣະມານເປັນຫລາຍເທື່ອ ນັບຕັ້ງແຕ່ສ້າງໂລກມາ ແຕ່ໃນຄາວ
ທີ່ສຸດນີ້ພຣະອົງໄດ້ຊົງປາກົດເພື່ອຖວາຍພຣະອົງເອງເປັນເຄື່ອງບູຊາພຽງເທື່ອດຽວ ເພື່ອລົບລ້າງບາບເປັນການສິ້ນສຸດ
27 ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫລັງຈາກນັ້ນຈະມີການຊົງພິພາກສາສັນໃດ
28 ພຣະຄຣິດກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງເປັນເຄື່ອງບູຊາເທື່ອດຽວ ເພື່ອແບກບາບຂອງຄົນຈຳນວນຫລາຍ
ໄວ້ ພຣະອົງຈະຊົງປາກົດເປັນເທື່ອທີສອງ ໂດຍບໍ່ກ່ຽວກັບບາບ ແຕ່ເພື່ອໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນ
ຮົນ ໃຫ້ໄດ້ຮັບຄວາມພົ້ນ

## 10

Christ's Sacrifice Once for All

(ພສສ 40:6-8)

1 ດ້ວຍວ່າພຣະບັນຍັດເປັນພຽງແຕ່ເງົາຂອງສິ່ງປະເສີດທີ່ຈະມາພາຍໜ້ານັ້ນ ແລະບໍ່ແມ່ນຕົວຈິງຂອງສິ່ງເຫລົ່ານັ້ນ
ເຄື່ອງບູຊາທີ່ເຂົາຖວາຍທຸກປີສເມີມາຕາມພຣະບັນຍັດ ກໍບໍ່ອາດຈະເຮັດໃຫ້ຜູ້ທີ່ເຂົ້າເຝົ້ານັ້ນເຖິງທີ່ສຳເຣັດໄດ້ຈັກເທື່ອ
2 ເພາະຖ້າຢ່າງນັ້ນໄດ້ ເຂົາຄົງໄດ້ຢຸດການຖວາຍເຄື່ອງບູຊາແລ້ວ ບໍ່ແມ່ນຫລື ຖ້າຜູ້ໃດນະມັສການນັ້ນໄດ້ຮັບການຊຳ
ຣະລ້າງເທື່ອດຽວເປັນການສິ້ນສຸດແລ້ວ ຄົນເຫລົ່ານັ້ນຄົງຈະບໍ່ຮູ້ສຶກວ່າມີບາບອີກຕໍ່ໄປ
3 ແຕ່ການຖວາຍເຄື່ອງບູຊານັ້ນເປັນການເຕືອນໃຫ້ລະນຶກເຖິງບາບທຸກປີ
4 ເຫດວ່າເລືອດງົວເຖິກແລະເລືອດແບ້ບໍ່ສາມາດຊຳຣະບາບໃຫ້ໝົດສິ້ນໄປໄດ້ຈັກເທື່ອ
5 ດັ່ງນັ້ນ, ເມື່ອພຣະຄຣິດສະເດັດເຂົ້າມາໃນໂລກ ພຣະອົງຊົງທູນວ່າ, "ເຄື່ອງບູຊາແລະຂອງທານ ພຣະອົງເຈົ້າບໍ່ຊົງປະ
ສົງ ແຕ່ພຣະອົງໄດ້ຈັດຕຽມຮ່າງກາຍສຳລັບຂ້າພຣະອົງ
6 ເຄື່ອງເຜົາບູຊາ ແລະເຄື່ອງບູຊາລົບລ້າງບາບນັ້ນ ພຣະອົງເຈົ້າບໍ່ຊົງພໍພຣະທັຍ
7 ເມື່ອນັ້ນຂ້າພຣະອົງຈຶ່ງທູນວ່າ, "ຂ້າແດ່ພຣະເຈົ້າ ຂ້າພຣະອົງໄດ້ມາເພື່ອຈະເຮັດຕາມນໍ້າພຣະທັຍຂອງພຣະອົງ ຕາມ
ທີ່ມີເຣື່ອງຂອງຂ້າພຣະອົງຂຽນໄວ້ໃນໜັງສືມ້ວນນັ້ນ"
8 ເມື່ອພຣະອົງຊົງກ່າວແລ້ວວ່າ, "ເຄື່ອງບູຊາແລະຂອງທານ" ກັບ "ເຄື່ອງເຜົາບູຊາແລະເຄື່ອງບູຊາລົບລ້າງບາບ ທີ່ເຂົາ
ໄດ້ບູຊາຕາມພຣະບັນຍັດນັ້ນ ພຣະອົງເຈົ້າບໍ່ຊົງປະສົງແລະບໍ່ຊົງພໍພຣະທັຍ"
9 ຕໍ່ນັ້ນມາພຣະອົງຊົງກ່າວວ່າ, "ຂ້າແດ່ພຣະເຈົ້າ, ຂ້າພຣະອົງໄດ້ມາເພື່ອຈະເຮັດຕາມນໍ້າພຣະທັຍຂອງພຣະອົງ" ພຣະ
ອົງຊົງເລີກລະບົບເດີມນັ້ນເສັຽ ເພື່ອຈະຊົງຕັ້ງລະບົບທີສອງໄວ້
10 ແລະໂດຍນໍ້າພຣະທັຍນັ້ນແຫລະ, ທີ່ເຮົາທັງຫລາຍໄດ້ຮັບການຊົງຊຳຣະໃຫ້ບໍຣິສຸດ ດ້ວຍການຖວາຍພຣະກາຍຂອງ
ພຣະເຢຊູຄຣິດເທື່ອດຽວເທົ່ານັ້ນ ເປັນການສິ້ນສຸດ
11 ຝ່າຍປະໂຣຫິດທຸກຕົນກໍຢືນບົວລະບັດຢູ່ທຸກວັນ ໂດຍການນຳເຄື່ອງບູຊາຢ່າງດຽວກັນມາຖວາຍເລື້ອຍໆ ເຄື່ອງບູຊາ
ນັ້ນບໍ່ສາມາດຊຳຣະລ້າງບາບໄດ້ຈັກເທື່ອ
12 ແຕ່ເມື່ອປະໂຣຫິດຕົນນີ້ໄດ້ຖວາຍເຄື່ອງບູຊາອັນດຽວ ເປັນເຄື່ອງບູຊາລົບລ້າງບາບໄດ້ຕລອດໄປ "ພຣະອົງກໍສະເດັດ
ປະທັບເບື້ອງຂວາຂອງພຣະເຈົ້າ"
13 ເພື່ອຊົງຄອຍຢູ່ "ຈົນບັນດາສັດຕຣູຂອງພຣະອົງຖືກປາບລົງໃຕ້ພຣະບາດຂອງພຣະອົງ"
14 ເພາະວ່າດ້ວຍເຄື່ອງບູຊາອັນດຽວ ພຣະອົງໄດ້ຊົງໂຜດຄົນທັງຫລາຍທີ່ຊົງຊຳຣະເປັນບໍຣິສຸດນັ້ນໃຫ້ເຖິງທີ່ສຳເຣັດ
ເປັນນິດ
15 ແລະພຣະວິນຍານບໍຣິສຸດຊົງເປັນພຍານໃຫ້ແກ່ພວກເຮົາເໝືອນກັນ ເພາະວ່າພຣະອົງໄດ້ຊົງກ່າວໄວ້ແລ້ວວ່າ,

16 “ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ “ນີ້ແມ່ນຄຳສັນຍາທີ່ເຮົາຈະສັນຍາໄວ້ກັບເຂົາພາຍຫລັງສມັຍນັ້ນ ຄືເຮົາຈະບັນຈຸຂໍ້ບັນ
ຍັດຂອງເຮົາໄວ້ໃນຈິດໃຈຂອງເຂົາ ເຮົາຈະຈາຣຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ”
17 (ແລະຊົງກ່າວຕໍ່ໄປວ່າ) “ແລະການຜິດບາບກັບການອະທັມຂອງເຂົາ ເຮົາຈະບໍ່ຈົດຈຳຕໍ່ໄປອີກຈັກເທື່ອ”
18 ເພາະວ່າເມື່ອມີການໃຫ້ອະພັຍແລ້ວ ກໍບໍ່ມີເຄື່ອງບູຊາລົບລ້າງຕໍ່ໄປ

A Call to Persevere

19 ດັ່ງນັ້ນພີ່ນ້ອງທັງຫລາຍເອີຍ, ເຮົາທັງຫລາຍມີໃຈກ້າຈະເຂົ້າໄປໃນສະຖານສັກສິດທີ່ສຸດດ້ວຍຄວາມຕາຍຂອງພຣະເຢ
ຊູ
20 ຕາມທາງໃຫມ່ຊຶ່ງມີຊີວິດ ທີ່ພຣະອົງໄດ້ຊົງໄຂອອກໃຫ້ພວກເຮົາ ຜ່ານເຂົາໄປທາງຜ້າກັ້ງນັ້ນ ຄືທາງພຣະກາຍຂອງ
ພຣະອົງ
21 ອີກປະການນຶ່ງ, ພວກເຮົາມີປະໂຣຫິດຕົນໃຫຍ່ເໜືອນຄົວເຮືອນຂອງພຣະເຈົ້າແລ້ວ
22 ໂດຍເຫດນີ້, ຈົ່ງໃຫ້ພວກເຮົາເຂົ້າໄປໃກ້ດ້ວຍຈິງໃຈ ດ້ວຍຄວາມເຊື່ອອັນເຕັມບໍຣິບູນ ມີໃຈທີ່ໄດ້ຮັບການຊົງຊຳຮະ
ຈາກການຮູ້ສຶກຕົວວ່າມີບາບ ແລະມີຮ່າງກາຍທີ່ຊຳຮະລ້າງດ້ວຍນ້ຳບໍຣິສຸດ
23 ຈົ່ງຍຶດໝັ້ນໃນຄວາມຫວັງທີ່ພວກເຮົາປະກາດຕົວວ່າໄດ້ຮັບໄວ້ແລ້ວນັ້ນ ຢ່າໃຫ້ເຄື່ອນໄຫວ ເພາະວ່າພຣະອົງຜູ້ຊົງປະ
ທານພຣະສັນຍານັ້ນກໍຊົງສັດຊື່
24 ຈົ່ງຄ່ອຍພິຈາຣະນາເບິ່ງເຊິ່ງກັນແລະກັນ ເພື່ອປຸກໃຈເຊິ່ງກັນແລະກັນໃຫ້ມີຄວາມຮັກແລະເຮັດການດີງາມ
25 ຢ່າປະການປະຊຸມກັນເຫມືອນຢ່າງລາງຄົນເຄີຍປະນັ້ນ ແຕ່ຈົ່ງຫນຸນໃຈກັນຫລາຍກວ່າເກົ່າອີກ ເພາະທ່ານກໍຮູ້ກໍເຫັນ
ຢູ່ວ່າວັນນັ້ນໃກ້ເຂົ້າມາແລ້ວ
26 ດ້ວຍວ່າຖ້າພວກເຮົາໄດ້ຮັບຄວາມຮູ້ເຣື່ອງຄວາມຈິງແລ້ວ ແຕ່ຍັງເຈຕະນາເຮັດບາບຢູ່ ເຄື່ອງບູຊາລົບລ້າງບາບກໍຈະບໍ່
ມີເຫລືອຢູ່ຕໍ່ໄປ
27 ເຫລືອແຕ່ຄວາມຢ້ານອັນພິລຶກໃນການລໍຖ້າການພິພາກສາລົງໂທດ ແລະໄຟອັນຮ້າຍແຮງທີ່ຈະເຜົາຜານບັນດາຄົນທີ່
ຕໍ່ສູ້ພຣະເຈົ້າ
28 ຄົນທີ່ລະເມີດບັນຍັດຂອງໂມເຊນັ້ນ ຖ້າມີພຍານສອງຫລືສາມປາກ ກໍຈະຕ້ອງຕາຍໂດຍບໍ່ມີຄວາມເມດຕາ
29 ທ່ານທັງຫລາຍ ຈົ່ງຄຶດເບິ່ງວ່າ ຄົນທີ່ຢຽບຢ່ຳພຣະບຸດຂອງພຣະເຈົ້າ ແລະຖືພຣະໂລຫິດອັນກ່ຽວກັບພຣະສັນຍາ ຊຶ່ງ
ຊຳຮະຕົວໃຫ້ບໍຣິສຸດວ່າເປັນສິ່ງຊົ່ວຊ້າ ກັບທັງປມາດພຣະວິນຍານຜູ້ຊົງພຣະຄຸນນັ້ນ ຄວນຈະຖືກລົງໂທດຫລາຍກວ່າ
ຄົນເຫລົ່ານັ້ນຈັກເທົ່າໃດ
30 ເພາະພວກເຮົາໄດ້ຮູ້ຈັກພຣະອົງຜູ້ຊົງກ່າວວ່າ “ການແກ້ແຄ້ນເປັນທຸຣະຂອງເຮົາ ຝ່າຍເຮົາຈະຕອບແທນ” ແລະໄດ້ຊົງ
ກ່າວອີກວ່າ “ອົງພຣະຜູ້ເປັນເຈົ້າຈະຊົງພິພາກສາພົລເມືອງຂອງພຣະອົງ”
31 ການຕົກຢູ່ໃນເງື້ອມພຣະຫັດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ນັ້ນ ກໍເປັນທີ່ໜ້າຫວາດກົວ
32 ແຕ່ທ່ານທັງຫລາຍຈົ່ງລະນຶກເຖິງຄາວກ່ອນນັ້ນ ຫລັງຈາກທີ່ທ່ານໄດ້ຮັບຄວາມສວ່າງແລ້ວ ພວກທ່ານໄດ້ສູ້ທົນຕໍ່
ຄວາມຍາກລຳບາກອັນໃຫຍ່ຫລວງ
33 ລາງເທື່ອພວກທ່ານກໍຖືກການປະຈານອັບອາຍຂາຍໜ້າ ແລະຖືກຂົ່ມເຫັງໃຫ້ປະຊາຊົນຊົມ ລາງເທື່ອພວກທ່ານກໍເຂົ້າ
ຮ່ວມທຸກຄົນກັບຄົນທີ່ຖືກການຢ່າງດຽວກັນນັ້ນ
34 ເພາະວ່າທ່ານທັງຫລາຍມີໃຈເມດຕາຕໍ່ຄົນເຫລົ່ານັ້ນທີ່ຖືກຜູກມັດ ແລະເມື່ອມີຄົນປຸ້ນເອົາຊັບສິ່ງຂອງໆພວກທ່ານໄປ
ພວກທ່ານກໍຍອມໃຫ້ເຂົາດ້ວຍໃຈຍິນດີ ເພາະພວກທ່ານຮູ້ແລ້ວວ່າ ພວກທ່ານເອງມີຊັບສົມບັດດີກວ່າແລະຖາ
ວອນກວ່ານັ້ນອີກ
35 ເຫດສັນນັ້ນຢ່າໄດ້ປະຖິ້ມຄວາມໄວ້ວາງໃຈຂອງພວກທ່ານ ທີ່ຈະມີຣາງວັນອັນໃຫຍ່ນັ້ນ

36 ທ່ານທັງຫລາຍຈຳເປັນຕ້ອງມີຄວາມອົດທົນ ເພື່ອວ່າ, ເມື່ອໄດ້ເຮັດຕາມນ້ຳພຣະທັຍຂອງພຣະເຈົ້າແລ້ວ ກໍຈະໄດ້ຮັບຕາມທີ່ຊົງສັນຍາໄວ້

37 "ອີກບໍ່ເຫິງ, ບໍ່ເຫິງເທົ່າໃດ ພຣະອົງຜູ້ຈະສະເດັດມາກໍຈະສະເດັດມາ ແລະຈະບໍ່ຊົງຊັກຊ້າ

38 ແຕ່ຄົນຊອບທັມຂອງເຮົາຈະມີຊີວິດຢູ່ດ້ວຍຄວາມເຊື່ອ ຖ້າເຂົາຫາກຫລົບຖອຍຫລັງ ເຮົາຈະບໍ່ພໍໃຈໃນຄົນນັ້ນ"

39 ສ່ວນພວກເຮົາ, ບໍ່ຢູ່ຝ່າຍຄົນທີ່ຫລົບຖອຍຫລັງຈົນເຖິງຄວາມຈິບຫາຍເສັຽ ແຕ່ຢູ່ຝ່າຍຄົນທີ່ມີຄວາມເຊື່ອ ຈຶ່ງຮັກສາຊີວິດແລະຈິດໃຈຂອງຕົນໄວ້ໄດ້

## 11 ເຣື່ອງຄວາມເຊື່ອ

The Meaning of Faith

1 ອັນນຶ່ງ, ຄວາມເຊື່ອ ຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ

2 ເພາະດ້ວຍຄວາມເຊື່ອນີ້ເອງ ພວກເຖົ້າເກົ່າບູຮານໄດ້ຮັບຄຳພຍານອັນດີ

3 ໂດຍຄວາມເຊື່ອນີ້ເຮົາທັງຫລາຍຈຶ່ງເຂົ້າໃຈວ່າໂລກຈັກກະວານນີ້ໄດ້ຖືກສ້າງຂຶ້ນດ້ວຍພຣະທັມຂອງພຣະເຈົ້າ ດັ່ງນັ້ນສິ່ງທີ່ຕາເຫັນຢູ່ກໍບໍ່ໄດ້ເກີດຈາກສິ່ງທີ່ປາກົດໃຫ້ເຫັນ

The Examples of Abel, Enoch, and Noah

(ປຖມ 4:1-16; 6:5--8:22)

4 ເພາະອາເບນມີຄວາມເຊື່ອນີ້ ຈຶ່ງໄດ້ນຳເອົາເຄື່ອງບູຊາອັນຖືກຕ້ອງກວ່າເຄື່ອງບູຊາຂອງກາອິນມາຖວາຍແດ່ພຣະເຈົ້າຊຶ່ງເຮັດໃຫ້ທ່ານໄດ້ຮັບຄຳພຍານວ່າເປັນຄົນຊອບທັມ ພຣະເຈົ້າກໍໄດ້ຊົງເປັນພຍານແກ່ຂອງທານຂອງທ່ານ ເຖິງແມ່ນວ່າອາເບນຕາຍແລ້ວກໍຈິງ ແຕ່ເພາະມີຄວາມເຊື່ອທ່ານຈຶ່ງຍັງເວົ້າຢູ່

5 ເພາະເອໂນກມີຄວາມເຊື່ອນີ້ພຣະເຈົ້າຈຶ່ງຊົງຮັບທ່ານຂຶ້ນໄປ ເພື່ອບໍ່ໃຫ້ທ່ານພົບກັບຄວາມຕາຍ ແລະບໍ່ມີຜູ້ໃດພົບເຫັນທ່ານ ເພາະພຣະເຈົ້າຊົງຮັບເອົາທ່ານໄປແລ້ວ ອັນນຶ່ງ, ກ່ອນທີ່ຊົງຮັບເອົາທ່ານຂຶ້ນໄປນັ້ນ ມີຜູ້ເປັນພຍານວ່າທ່ານເປັນທີ່ພໍພຣະທັຍພຣະເຈົ້າ

6 ແຕ່ຖ້າບໍ່ມີຄວາມເຊື່ອແລ້ວຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນຕ້ອງເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານຣາງວັນໃຫ້ແກ່ທຸກຄົນທີ່ສແວງຫາພຣະອົງ

7 ເພາະໂນອາມີຄວາມເຊື່ອນີ້ ພຣະເຈົ້າຈຶ່ງຊົງຕັກເຕືອນໃຫ້ຮູ້ເຖິງເຫດການທີ່ຍັງບໍ່ປາກົດ ທ່ານຈຶ່ງຢຳເກງແລະຕໍ່ນາວາເພື່ອໃຫ້ຄອບຄົວຂອງຕົນພົ້ນຈາກຄວາມຕາຍ ແລະດ້ວຍເຫດນີ້, ທ່ານຈຶ່ງຕັດສິນລົງໂທດໃສ່ມະນຸສໂລກແລະໄດ້ກາຍເປັນຜູ້ຮັບມໍຣະດົກ ຄືຄວາມຊອບທັມຊຶ່ງເກີດມາຈາກຄວາມເຊື່ອ

The Faith of Abraham

(ປຖມ 15:1-6; 21:1-7; 22:1-14; 48:8-16; 50:22-25)

8 ເພາະອັບຣາຮາມມີຄວາມເຊື່ອນີ້ ເມື່ອພຣະເຈົ້າຊົງເອີ້ນໃຫ້ທ່ານອອກເດີນທາງໄປຍັງບ່ອນທີ່ທ່ານຈະໄດ້ຮັບເປັນມໍຣະດົກ ທ່ານໄດ້ເຊື່ອຟັງແລະໄດ້ເດີນທາງອອກໄປໂດຍບໍ່ຮູ້ເລີຍວ່າຕົນຈະໄປໃສ

9 ເພາະທ່ານມີຄວາມເຊື່ອນີ້ ຈຶ່ງໄດ້ອາສັຍຢູ່ໃນແຜ່ນດິນທີ່ຊົງສັນຍາໄວ້ນັ້ນເໝືອນເປັນຄົນຕ່າງດ້າວ ຄືອາສັຍຢູ່ໃນຜ້າເຕັນດ້ວຍກັນກັບອີຊາກ ແລະຢາໂຄບ ຜູ້ຊຶ່ງໄດ້ຮ່ວມຮັບພຣະສັນຍາເປັນມໍຣະດົກອັນດຽວກັນ

10 ທ່ານໄດ້ລໍຄອຍນະຄອນທີ່ຕັ້ງຢູ່ເທິງຮາກຖານ ຊຶ່ງພຣະເຈົ້າຊົງເປັນນາຍຊ່າງແລະຊົງເປັນຜູ້ສ້າງຂຶ້ນ

11 ເພາະທ່ານມີຄວາມເຊື່ອນີ້ ທ່ານຈຶ່ງມີກຳລັງໃຫ້ບັງເກີດເຊື້ອສາຍ ເມື່ອອາຍຸແກ່ເກີນແລ້ວແລະນາງຊາຣາກໍເປັນໝັນແຕ່ອັບຣາຮາມກໍຖືວ່າພຣະອົງຜູ້ຊົງສັນຍານັ້ນເປັນຜູ້ສັດຊື່

12 ເຫດສັນນັ້ນ ຈາກຊາຍຄົນດຽວຊຶ່ງເກືອບຈະກ່າວໄດ້ວ່າເໝືອນຄົນທີ່ຕາຍແລ້ວນັ້ນ ກໍມີຜູ້ສືບເຊື້ອສາຍເກີດມາຢ່າງຫລວງຫລາຍເໝືອນດວງດາວໃນທ້ອງຟ້າ ແລະເໝືອນເມັດຊາຍທີ່ນັບບໍ່ຖ້ວນຢູ່ແຄມທະເລ

13 ສ່ວນຄົນເຫລົ່ານັ້ນ, ໄດ້ຕາຍໄປໃນຂະນະທີ່ມີຄວາມເຊື່ອ ໂດຍບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ ແຕ່ເຂົາກໍໄດ້ເຫັນແລະຕ້ອນ
ຮັບໄວ້ຕັ້ງແຕ່ໄກ ແລະຍອມຕົວວ່າເຂົາເປັນພຽງແຂກເມືອງທີ່ທ່ອງທ່ຽວໄປມາໃນໂລກ
14 ເພາະຄົນທີ່ເວົ້າຢ່າງນີ້ກໍສະແດງໃຫ້ເຫັນຄັກແລ້ວວ່າ ເຂົາກຳລັງສແວງຫາບ້ານເມືອງຂອງຕົນ
15 ຈິງແທ້, ຖ້າເຂົາໄດ້ຄຶດເຖິງບ້ານເມືອງທີ່ເຂົາຈາກມາແລ້ວນັ້ນ ເຂົາກໍຄົງຈະມີໂອກາດກັບຄືນໄດ້
16 ແຕ່ບັດນີ້ເຂົາປາຖນາທີ່ຈະຢູ່ໃນເມືອງອັນປະເສີດກວ່ານັ້ນ ຄືເມືອງສວັນ ເຫດສັນນັ້ນ, ພຣະເຈົ້າຈຶ່ງບໍ່ຊົງລະອາຍ ເມື່ອ
ເຂົາເອີ້ນພຣະອົງວ່າເປັນພຣະເຈົ້າຂອງເຂົາ ເພາະວ່າພຣະອົງໄດ້ຊົງຈັດແຈງນະຄອນນຶ່ງໄວ້ສຳລັບເຂົາແລ້ວ
17 ເພາະອັບຣາຮາມມີຄວາມເຊື່ອນີ້ ເມື່ອທ່ານຖືກລອງໃຈຈຶ່ງໄດ້ຖວາຍອີຊາກເປັນເຄື່ອງບູຊາ ເຖິງແມ່ນທ່ານເປັນຜູ້ໄດ້
ຮັບພຣະສັນຍາ ກໍພ້ອມແລ້ວທີ່ຈະຖວາຍລູກຄົນດຽວຂອງທ່ານ
18 ຄືລູກທີ່ມີພຣະສັນຍາກ່າວເຖິງວ່າ, "ເຊື້ອສາຍຂອງເຈົ້າຈະສືບຕໍ່ໄປທາງອີຊາກ"
19 ແຕ່ອັບຣາຮາມຄຶດວ່າພຣະເຈົ້າຊົງຣິດສາມາດໃຫ້ມີການຄືນມາຈາກຕາຍໄດ້ ແລະທ່ານກໍໄດ້ຮັບລູກນັ້ນປຽບເໝືອນ
ເປັນຄືນມາແທ້
20 ເພາະອີຊາກມີຄວາມເຊື່ອນີ້ ຈຶ່ງໄດ້ອວຍພອນຢາໂຄບແລະເອຊາວສຳລັບເຫດການທີ່ຈະເກີດຂຶ້ນໃນພາຍໜ້າ
21 ເພາະຢາໂຄບມີຄວາມເຊື່ອນີ້ ເມື່ອໃກ້ຈະຕາຍຈຶ່ງໄດ້ອວຍພອນແກ່ລູກຊາຍຂອງໂຢເຊັບທຸກຄົນ ແລະໝູບນະມັສ
ການພຣະເຈົ້າເໜືອຫົວໄມ້ເທົ້າຂອງຕົນ
22 ເພາະໂຢເຊັບມີຄວາມເຊື່ອນີ້ ເມື່ອກຳລັງຈະໝົດຊີວິດຈຶ່ງໄດ້ກ່າວເຖິງເຣື່ອງອິສຣາເອນຈະອອກໄປນັ້ນ ແລະໄດ້ສັ່ງໄວ້
ເຖິງເຣື່ອງກະດູກຂອງຕົນ

The Faith of Moses

(ອພຍ 2:1-10; 12:31-51)

23 ເພາະພໍ່ແມ່ຂອງໂມເຊມີຄວາມເຊື່ອນີ້ ເມື່ອໂມເຊເກີດຈຶ່ງໄດ້ເຊື່ອງໄວ້ລະຫວ່າງສາມເດືອນ ເພາະເຫັນວ່າໂມເຊມີຮູບ
ງາມ ແລະພໍ່ແມ່ບໍ່ໄດ້ຢ້ານຂໍ້ດຳຣັດຂອງກະສັດ
24 ເພາະໂມເຊມີຄວາມເຊື່ອນີ້ ເມື່ອໃຫຍ່ມາແລ້ວທ່ານບໍ່ຍອມໃຫ້ຜູ້ໃດເອີ້ນຕົນເປັນບຸດທິດາຂອງຟາຣາໂອ
25 ທ່ານເລືອກເອົາການຢູ່ຮ່ວມທຸກລຳບາກກັບພົລເມືອງຂອງພຣະເຈົ້າແທນຄວາມເພີດເພີນຊົ່ວຄາວໃນຄວາມບາບ
26 ທ່ານຖືວ່າການອົດທົນຕໍ່ຄວາມອັບອາຍເພື່ອພຣະຄຣິດປະເສີດກວ່າສົມບັດຂອງປະເທດເອຢິບເພາະທ່ານເລັງເຫັນ
ຮາງວັນທີ່ຈະໄດ້ຮັບນັ້ນ
27 ເພາະມີຄວາມເຊື່ອນີ້ ທ່ານຈຶ່ງອອກຈາກປະເທດເອຢິບເສັຽ ໂດຍບໍ່ຢ້ານຄວາມຮ້າຍຂາດຂອງກະສັດນັ້ນ ເພາະທ່ານ
ໝັ້ນໃຈເໝືອນກັບວ່າໄດ້ເຫັນພຣະອົງຜູ້ບໍ່ຊົງປາກົດແກ່ຕາ
28 ເພາະມີຄວາມເຊື່ອນີ້ ທ່ານຈຶ່ງໄດ້ຖືເທສການປັສຄາ ແລະພິທີຊິດເລືອດ ເພື່ອບໍ່ໃຫ້ເພັຊຄາດຜູ້ປະຫານຊີວິດລູກກົກ
ມາຖືກພວກອິສຣາເອນໄດ້

The Faith of Other Israelite Heroes

29 ເພາະພວກອິສຣາເອນມີຄວາມເຊື່ອນີ້ ເຂົາຈຶ່ງຍ່າງຂ້າມທະເລແດງ ເໝືອນກັບຍ່າງເທິງດິນແຫ້ງ ແຕ່ເມື່ອຊາວເອຢິບ
ໄດ້ທົດລອງຂ້າມເບິ່ງ ເຂົາກໍຈົມນໍ້າຕາຍໝົດ
30 ເພາະມີຄວາມເຊື່ອນີ້ ເມື່ອພວກອິສຣາເອນໄດ້ວຽນລ້ອມເມືອງເຢຣີໂກເຖິງເຈັດວັນແລ້ວ ກຳແພງເມືອງນັ້ນຈຶ່ງເພພັງ
ລົງ
31 ເພາະມີຄວາມເຊື່ອນີ້ ຣາຮາບຍິງໂສເພນີຈຶ່ງບໍ່ຈິບຫາຍໄປພ້ອມກັບຄົນເຫລົ່ານັ້ນທີ່ບໍ່ເຊື່ອຟັງ ເພາະນາງໄດ້ຕ້ອນຮັບ
ພວກສອດແນມເປັນຢ່າງດີ
32 ແລະເຮົາຈະເວົ້າສິ່ງໃດຕໍ່ໄປອີກແດ່ ເພາະບໍ່ມີເວລາພໍທີ່ຈະກ່າວເຖິງກີເດໂອນ ບາຣາກ ແຊມຊັນ ເຢັບທາ ດາວິດ
ແລະຊາມູເອນ ແລະຜູ້ປະກາດ

ພຣະທັມທັງຫລາຍ
33 ເພາະຄົນເຫລົ່ານີ້ມີຄວາມເຊື່ອ ເຂົາຈຶ່ງໄດ້ມີຊັຍເໜືອແຜ່ນດິນຕ່າງໆ ໄດ້ຈັດຕັ້ງລະບົບຄວາມຍຸດຕິທັມ ໄດ້ຮັບຜົນ
ຕາມພຣະສັນຍາ ໄດ້ອັດປາກສິງ
34 ໄດ້ມອດໄຟອັນຮ້ອນກ້າ ໄດ້ພົ້ນຈາກຄົມດາບ ຄວາມອ່ອນແອຂອງເຂົາກໍກັບກາຍເປັນຄວາມແຂງແຮງ ມີກໍາລັງ
ຄວາມສາມາດໃນເສິກສົງຄາມ ໄດ້ຕີກອງທັບຕ່າງປະເທດໃຫ້ແຕກໜີໄປ
35 ພວກຜູ້ຍິງກໍໄດ້ຮັບຄົນທີ່ຕາຍແລ້ວຂອງເຂົາ ໂດຍທາງເປັນຄືນມາອີກ ລາງຄົນກໍໄດ້ຖືກທໍຣະມານ ແຕ່ກໍບໍ່ຍອມຮັບ
ການປົດປ່ອຍ ເພື່ອເຂົາຈະໄດ້ຮັບການຄືນມາອັນປະເສີດກວ່າ
36 ລາງຄົນຖືກທົດລອງໃຈດ້ວຍມີຜູ້ເຍາະເຍີ້ຍແລະຂ້ຽນຕີ ອີກລາງຄົນຖືກລ່າມໂສ້ແລະຖືກຂັງຄຸກເໝືອນກັນ
37 ລາງຄົນໄດ້ຖືກເຂົາຄວ່າງຫີນໃສ່ ໄດ້ຖືກເລື່ອຍເປັນທ່ອນ ໄດ້ຖືກຂ້າດ້ວຍຄົມດາບເສັຽ ໄດ້ນຸ່ງຫົ່ມໜັງແກະໜັງແບ້ທຽວ
ໄປມາ ອຶດເຂົ້າຫິວນໍ້າ ທົນທຸກເວທະນາ ແລະທົນການກົດຂີ່ຂົ່ມເຫັງ
38 (ແຜ່ນດິນໂລກກໍບໍ່ສົມກັບຄົນເຫລົ່ານັ້ນ) ເຂົາໄດ້ທຽວໄປມາໃນປ່າແລະຕາມພູ ຊ່ອນຕົວໃນຖໍ້າແລະໃນຂຸມ
39 ຄົນທັງປວງນີ້, ເຖິງແມ່ນເຂົາໄດ້ຮັບຄໍາພຍານອັນດີຍ້ອນຄວາມເຊື່ອຂອງເຂົາ ແຕ່ເຂົາກໍຍັງບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້
ແລ້ວນັ້ນ
40 ເພາະວ່າພຣະເຈົ້າຊົງຈັດແຈງສິ່ງທີ່ປະເສີດກວ່ານັ້ນສໍາລັບພວກເຮົາ ເພື່ອວ່ານອກຈາກພວກເຮົາເຂົາຈະບໍ່ເຖິງທີ່ສໍາ
ເຣັດໄດ້

## 12 ເຫດທີ່ອົງພຣະຜູ້ເປັນເຈົ້າຊົງຕີສອນ

The Example of Jesus

(ສພສ 3:11-12)

1 ເຫດສັນນັ້ນ ເມື່ອເຮົາທັງຫລາຍມີຝູງພຍານຫລວງຫລາຍຢູ່ຮອບຂ້າງຢ່າງນີ້ແລ້ວ ພວກເຮົາຈົ່ງຊັດຖິ້ມທຸກຢ່າງທີ່ຖ່ວງ
ຢູ່ ແລະຜິດບາບທີ່ຕິດແໜ້ນໂດຍງ່າຍ ສ່ວນການແລ່ນແຂ່ງທີ່ກໍານົດໄວ້ຕໍ່ໜ້າພວກເຮົານັ້ນ ຈົ່ງພາກັນແລ່ນດ້ວຍ
ຄວາມພຽນພຍາຍາມ
2 ຈົ່ງປັກຕາເບິ່ງພຣະເຢຊູ ຄືຜູ້ບຸກເບີກຄວາມເຊື່ອ ແລະຜູ້ຊົງເຮັດໃຫ້ຄວາມເຊື່ອຂອງພວກເຮົາເຖິງທີ່ສໍາເຣັດ ພຣະອົງ
ໄດ້ຊົງອົດທົນຕໍ່ໄມ້ກາງແຂນ ເພາະເຫັນແກ່ຄວາມຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ ພຣະອົງຊົງຖືວ່າຄວາມລະອາຍນັ້ນບໍ່
ເປັນສິ່ງສໍາຄັນ ຈຶ່ງໄດ້ປະທັບລົງເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າ
3 ຈົ່ງພິຈາຣະນາຄຶດເຖິງພຣະອົງ ຜູ້ຊົງອົດທົນການຂັດຂວາງຂອງຄົນບາບທີ່ຕໍ່ສູ້ພຣະອົງ ເພື່ອທ່ານທັງຫລາຍຈະບໍ່ໝົດ
ກໍາລັງໃຈ
4 ໃນການຕໍ່ສູ້ກັບບາບນັ້ນ ທ່ານທັງຫລາຍບໍ່ໄດ້ຕໍ່ສູ້ເຖິງຂນາດເລືອດຕົກ
5 ແລະພວກທ່ານໄດ້ລືມຄໍາເຕືອນທີ່ພຣະອົງໄດ້ຊົງເຕືອນໃນຖານະທີ່ເປັນລູກວ່າ, "ລູກຂອງເຮົາເອີຍ, ຢ່າປມາດຕໍ່ການ
ຕີສອນຂອງອົງພຣະຜູ້ເປັນເຈົ້າ ແລະຢ່ານ້ອຍໃຈເມື່ອພຣະອົງຊົງຕິຕຽນ
6 ເພາະວ່າອົງພຣະຜູ້ເປັນເຈົ້າຊົງຕີສອນຜູ້ທີ່ພຣະອົງຊົງຮັກ ແລະເມື່ອພຣະອົງຊົງຮັບຜູ້ໃດເປັນລູກພຣະອົງກໍຊົງຂ້ຽນ
ສອນຜູ້ນັ້ນ"
7 ທ່ານທັງຫລາຍຈົ່ງຮັບແລະທົນເອົາເທາະ ເພາະເປັນການຕີສອນ ພຣະເຈົ້າຊົງປະຕິບັດຕໍ່ພວກທ່ານໃນຖານະທີ່ພວກ
ທ່ານເປັນລູກຂອງພຣະອົງ ດ້ວຍວ່າມີລູກຄົນໃດແດ່ທີ່ພໍ່ບໍ່ໄດ້ຕີສອນເຂົາ
8 ແຕ່ຖ້າທ່ານທັງຫລາຍບໍ່ໄດ້ຖືກຕີສອນ ຊຶ່ງລູກທຸກຄົນຕ້ອງຖືກນັ້ນ ພວກທ່ານກໍເປັນລູກທາງ ບໍ່ເປັນລູກແທ້
9 ອີກປະການນຶ່ງ, ເຮົາທັງຫລາຍມີພໍ່ເປັນມະນຸດທີ່ໄດ້ຕີສອນພວກເຮົາ ແລະພວກເຮົາກໍນັບຖືພໍ່ນັ້ນ ຫລາຍກວ່ານັ້ນອີກ
ພວກເຮົາຄວນຢູ່ໃຕ້ບັງຄັບຂອງພຣະບິດາແຫ່ງບັນດາວິນຍານຈິດ ແລະມີຊີວິດຈະເຣີນ ບໍ່ແມ່ນຫລື

10 ຝ່າຍພໍ່ເຫລົ່ານັ້ນໄດ້ຕີສອນພວກເຮົາໃນຊົ່ວເວລາເລັກນ້ອຍ ຕາມຄວາມເຫັນດີຂອງເຂົາເທົ່ານັ້ນ ແຕ່ພຣະອົງຊົງຕີ
ສອນພວກເຮົາເພື່ອປໂຍດຂອງພວກເຮົາ ເພື່ອໃຫ້ພວກເຮົາໄດ້ເຂົ້າສ່ວນໃນສະພາບຄວາມບໍຣິສຸດຂອງພຣະອົງ
11 ໃນຂນະທີ່ມີການຕີສອນນັ້ນບໍ່ເປັນໜ້າຊື່ນໃຈເລີຍ ມີແຕ່ເຣື່ອງເສົ້າໃຈ ແຕ່ຕໍ່ມາພາຍຫລັງຈະກໍ່ໃຫ້ເກີດຜົນ ຄືຄວາມ
ສຸກສຳຣານແລະຄວາມຊອບທັມແກ່ບັນດາຄົນທີ່ຖືກແອບສອນແລ້ວນັ້ນ

## ຕັກເຕືອນບໍ່ໃຫ້ຂາດຈາກພຣະຄຸນ

Warning against Rejecting God's Grace

(ປຖມ 25:29-34; 27:30-40)

12 ເພາະເຫດນັ້ນ, "ຈົ່ງຍົກມືທີ່ລ່ອຍອ່ອນແລະຫົວເຂົ່າທີ່ອ່ອນກຳລັງ ຈົ່ງໃຫ້ມີກຳລັງຂຶ້ນ"
13 "ຈົ່ງແປງທາງໃຫ້ຊື່ສຳລັບຕີນ" ຂອງພວກທ່ານ ເພື່ອຂາທີ່ພິການນັ້ນແທນທີ່ຈະພິກໂບກກໍຈະດີເປັນປົກກະຕິ
14 ຈົ່ງອົດສາພຍາຍາມທີ່ຈະຢູ່ຢ່າງສົງບສຸກກັບຄົນທັງຫລາຍ ແລະອົດສາພຍາຍາມທີ່ຈະໄດ້ໃຈບໍຣິສຸດ ຊຶ່ງຖ້າໃຈບໍ່ບໍຣິ
ສຸດກໍຈະບໍ່ມີຜູ້ໃດໄດ້ເຫັນອົງພຣະຜູ້ເປັນເຈົ້າ
15 ຈົ່ງຄ່ອຍຮັກສາໃຫ້ດີ ຢ້ານວ່າຈະມີຜູ້ໃດຂາດຈາກພຣະຄຸນຂອງພຣະເຈົ້າ ຢ້ານວ່າຈະມີຮາກຂົມຂື່ນງອກຂຶ້ນມາເຮັດ
ໃຫ້ມີຄວາມຫຍຸ້ງຍາກ ຊຶ່ງຈະເປັນເຫດໃຫ້ຫລາຍຄົນຊົ່ວມົວໝອງໄປ
16 ຢ້ານວ່າມີຄົນຂາດສິນທັມຫລືຄົນປມາດຕໍ່ສິ່ງສັກສິດເໝືອນເອຊາວ ຜູ້ໄດ້ເອົາສິດຂອງບຸດກົກນັ້ນແລກກັບອາຫານ
ຄາບດຽວ
17 ເພາະທ່ານທັງຫລາຍກໍຮູ້ຢູ່ແລ້ວວ່າ ຕໍ່ມາພາຍຫລັງ ເມື່ອເອຊາວຢາກໄດ້ຮັບພອນນັ້ນເປັນມໍຣະດົກ ທ່ານກໍໄດ້ຮັບແຕ່
ຄຳປະຕິເສດ ເຖິງແມ່ນວ່າທ່ານໄດ້ສແວງຫາຈົນນໍ້າຕາໄຫລກໍບໍ່ມີທາງແກ້ໄຂເລີຍ
18 ທ່ານທັງຫລາຍບໍ່ໄດ້ມາເຖິງສິ່ງທີ່ຈັບໄດ້ ເຖິງໄຟທີ່ໄຫມ້ຢູ່ ເຖິງທີ່ມືດດຳແລະມືດມົວ ແລະເຖິງທີ່ລົມພະຍຸ
19 ເຖິງສຽງແກ ແລະເຖິງພຣະສຸຣະສຽງ ຊຶ່ງຄົນທັງຫລາຍເມື່ອໄດ້ຍິນ ແລ້ວໄດ້ອ້ອນວອນຂໍບໍ່ໃຫ້ຊົງກ່າວຈັກຄຳຕໍ່ເຂົາອີກ
20 ເພາະວ່າຂໍ້ຄວາມທີ່ຊົງບັນຍັດໄວ້ນັ້ນເຂົາທົນບໍ່ໄດ້ ຄືວ່າ, "ແມ່ນແຕ່ສັດເດັຽຣະສານໂຕນຶ່ງໂຕໃດ ຖ້າຖືກຕ້ອງພູນັ້ນກໍ
ຈະຕ້ອງຖືກຄວ່າງດ້ວຍກ້ອນຫີນໃຫ້ຕາຍ"
21 ສິ່ງທີ່ປາກົດນັ້ນກໍເປັນໜ້າຢ້ານຫລາຍປານນັ້ນ ຈົນໂມເຊໄດ້ກ່າວວ່າ, "ຂ້າພະເຈົ້າຢ້ານເຕັມທີ ຈົນຕົວສັ່ນ"
22 ແຕ່ທ່ານທັງຫລາຍໄດ້ມາເຖິງພູຊີໂອນ ມາເຖິງນະຄອນຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ຄືນະຄອນເຢຣູຊາເລັມຊັ້ນຟ້າ
ມາເຖິງຝູງເທວະດານັບເປັນຈຳນວນໝື່ນໆທີ່ຊຸມນຸມກັນເປັນງານມ່ວນຊື່ນ
23 ມາເຖິງທີ່ຊຸມນຸມຂອງບຸດກົກຜູ້ມີຊື່ຈາຣຶກໄວ້ແລ້ວໃນສວັນ ມາເຖິງພຣະເຈົ້າຜູ້ຊົງພິພາກສາຄົນທັງປວງ ແລະມາ
ເຖິງວິນຍານຈິດຂອງຄົນຊອບທັມຜູ້ເຖິງທີ່ສຳເຣັດແລ້ວ
24 ມາເຖິງພຣະເຢຊູຜູ້ຊົງເປັນຜູ້ກາງຝ່າຍຄຳສັນຍາໃໝ່ ແລະມາເຖິງພຣະໂລຫິດຊຶ່ງຊົດໃສ່ແລ້ວ ທີ່ມີສຽງອັນດີກວ່າ
ເລືອດຂອງອາເບນອີກ
25 ຈົ່ງລະວັງໃຫ້ດີ ຢ່າປະຕິເສດບໍ່ຍອມຟັງພຣະອົງຜູ້ຊົງກ່າວຢູ່ນັ້ນ ເພາະຖ້າຄົນທັງຫລາຍທີ່ປະຕິເສດບໍ່ຍອມຟັງຄຳ
ເຕືອນຂອງພຣະອົງໃນໂລກ ບໍ່ພົ້ນໂທດທີ່ເຂົາປະຕິເສດນັ້ນ ພວກເຮົາຜູ້ອວ່າຍໜ້າຈາກພຣະອົງຜູ້ຊົງຕັກເຕືອນຈາກ
ສວັນ ກໍຈະບໍ່ພົ້ນໂທດຫລາຍກວ່າເຂົາເຫລົ່ານັ້ນເສັຽອີກ
26 ແມ່ນພຣະສຸຣະສຽງຂອງພຣະອົງນີ້ທີ່ໄດ້ບັນດານໃຫ້ແຜ່ນດິນຫວັ່ນໄຫວໃນຄາວນັ້ນ ແຕ່ບັດນີ້ພຣະອົງຊົງກ່າວສັນຍາ
ໄວ້ວ່າ, "ຍັງອີກເທື່ອນຶ່ງເຮົາຈະເຮັດໃຫ້ສນັ່ນຫວັ່ນໄຫວ ບໍ່ແມ່ນແຕ່ແຜ່ນດິນໂລກເທົ່ານັ້ນ ແຕ່ທັງທ້ອງຟ້າເໝືອນກັນ"
27 ຂໍ້ຄວາມທີ່ວ່າ "ຍັງອີກເທື່ອນຶ່ງ" ນັ້ນສະແດງວ່າ ສິ່ງທີ່ຫວັ່ນໄຫວນັ້ນຈະຖືກຍົກຍ້າຍໄປເສັຽ ເໝືອນກັບສິ່ງທີ່ຊົງສ້າງໃຫ້
ມີຂຶ້ນ ເພື່ອໃຫ້ສິ່ງທີ່ບໍ່ຫວັ່ນໄຫວຍັງຄົງເຫລືອຢູ່

28 ເຫດສັນນັ້ນ ເນື່ອງດ້ວຍພວກເຮົາຮັບແຜ່ນດິນທີ່ຫວັ່ນໄຫວບໍ່ໄດ້ແລ້ວ ກໍໃຫ້ພວກເຮົາຂອບພຣະຄຸນພຣະເຈົ້າ ເພື່ອ
ພວກເຮົາຈະໄດ້ບົວລະບັດພຣະເຈົ້າຕາມຊອບພຣະທັຍຂອງພຣະອົງ ດ້ວຍຄວາມໂຄຣົບຢຳເກງ
29 ເພາະພຣະເຈົ້າຂອງເຮົາທັງຫລາຍຊົງເປັນໄຟທີ່ເຜົາຜານ

## 13 ການປະຕິບັດທີ່ຊອບພຣະທັຍ

Service Well-Pleasing to God

1 ຈົ່ງໃຫ້ຄວາມຮັກຢ່າງພີ່ນ້ອງມີຢູ່ຕໍ່ກັນສເມີໄປ
2 ຢ່າລືມການຕ້ອນຮັບແຂກ ເພາະວ່າດ້ວຍການເຮັດດັ່ງນັ້ນ ບາງຄົນກໍໄດ້ຕ້ອນຮັບເທວະດາໂດຍຕົນບໍ່ທັນຮູ້
3 ຈົ່ງລະນຶກເຖິງຄົນທັງຫລາຍທີ່ຖືກລ່າມໂສ້ ເໝືອນກັບວ່າພວກທ່ານໄດ້ເຂົ້າຮ່ວມໃນການນັ້ນເໝືອນກັນຈົ່ງລະນຶກເຖິງ
ຄົນທັງຫລາຍທີ່ຖືກຂົ່ມເຫັງ ເພາະວ່າພວກທ່ານກໍມີຮ່າງກາຍເໝືອນກັນ
4 ຈົ່ງໃຫ້ການສົມຣົດເປັນທີ່ນັບຖືແກ່ຄົນທັງປວງ ແລະໃຫ້ຕຽງສົມຣົດເວັ້ນຈາກການຊົ່ວຮ້າຍ ເພາະຄົນຜິດຊາຍແລະຄົນ
ຫລິ້ນຊູ້ນັ້ນ ພຣະເຈົ້າຈະຊົງພິພາກສາລົງໂທດເຂົາ
5 ຈົ່ງໃຫ້ການດຳເນີນຊີວິດຂອງທ່ານ ເວັ້ນຈາກການຮັກເງິນຮັກຄຳ ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່ ເພາະພຣະເຈົ້າເອງຊົງກ່າວ
ໄວ້ວ່າ, “ເຮົາຈະບໍ່ປະເຈົ້າ ຫລືຖິ້ມເຈົ້າເສັຽຈັກເທື່ອ”
6 ເພາະເຫດນັ້ນ ເຮົາທັງຫລາຍອາດກ່າວດ້ວຍໃຈກ້າໄດ້ວ່າ, “ອົງພຣະຜູ້ເປັນເຈົ້ານີ້ແຫລະ, ຊົງເປັນພຣະຜູ້ຊ່ອຍຂອງຂ້າ
ພະເຈົ້າ ຂ້າພະເຈົ້າຈະບໍ່ຢ້ານ ມະນຸດຄົນໃດໜໍຈະເຮັດອັນໃດແກ່ຂ້າພະເຈົ້າໄດ້”
7 ຈົ່ງລະນຶກເຖິງພວກຜູ້ນຳຂອງທ່ານທັງຫລາຍ ຄືຜູ້ທີ່ໄດ້ປະກາດພຣະທັມແກ່ພວກທ່ານ ຈົ່ງພິຈາຣະນາເບິ່ງຜົນສຸດທ້າຍ
ແຫ່ງຊີວິດຂອງເຂົາ ແລະຈົ່ງປະຕິບັດຕາມແບບຢ່າງຄວາມເຊື່ອຂອງເຂົາ
8 ພຣະເຢຊູຄຣິດຊົງເປັນຢູ່ສເມີກັບທັງໃນເວລາວານນີ້ ໃນເວລາວັນນີ້ ແລະສືບໆໄປເປັນນິດ
9 ຢ່າຍອມໃຫ້ຄວາມສອນອັນແຕກຕ່າງນັ້ນພາຕົວຫລົງໄປ ເພາະເປັນການດີຢູ່ແລ້ວທີ່ຈະໃຫ້ກຳລັງໃຈເຂັ້ມແຂງຂຶ້ນ
ດ້ວຍພຣະຄຸນ ບໍ່ແມ່ນດ້ວຍອາຫານການກິນ ຊຶ່ງບໍ່ເປັນປໂຍດແກ່ຄົນທີ່ປະຕິບັດຕາມ
10 ພວກເຮົາມີແທ່ນບູຊາແທ່ນນຶ່ງ ຊຶ່ງຄົນຜູ້ປະຕິບັດໃນສຳນັກຜ້ານັ້ນບໍ່ມີສິດທີ່ຈະຮັບປະທານຂອງຈາກແທ່ນນັ້ນໄດ້
11 ດ້ວຍວ່າຊາກສັດເຫລົ່ານັ້ນ ທີ່ມະຫາປະໂຣຫິດໄດ້ເອົາເລືອດມັນເຂົ້າໄປໃນສະຖານທີ່ສັກສິດ ເພື່ອເປັນເຄື່ອງບູຊາລົບ
ລ້າງບາບ ເຂົາເຄີຍເອົາໄປເຜົາເສັຽນອກຄ້າຍ
12 ດ້ວຍເຫດນັ້ນພຣະເຢຊູກໍເໝືອນກັນໄດ້ຊົງທົນທຸກທໍຣະມານນອກປະຕູເມືອງ ເພື່ອຊຳຣະພົລເມືອງໃຫ້ບໍຣິສຸດດ້ວຍ
ພຣະໂລຫິດຂອງພຣະອົງເອງ
13 ເຫດສັນນັ້ນ ໃຫ້ເຮົາທັງຫລາຍອອກໄປຫາພຣະອົງນອກຄ້າຍນັ້ນ ແລະຍອມທົນເອົາຄຳໝິ່ນປມາດ ຊຶ່ງພຣະອົງຊົງທົນ
ເອົານັ້ນ
14 ເພາະວ່າທີ່ນີ້ພວກເຮົາບໍ່ມີນະຄອນອັນຖາວອນ ແຕ່ພວກເຮົາສແວງຫານະຄອນທີ່ຈະມີມາໃນພາຍໜ້ານັ້ນ
15 ເຫດສັນນັ້ນ ໃຫ້ເຮົາທັງຫລາຍຖວາຍຄຳສັຣເສີນ ເປັນເຄື່ອງບູຊາແດ່ພຣະເຈົ້າໂດຍຕລອດໄປທາງ
ພຣະອົງນັ້ນ ຄືຜົນແຫ່ງຮີມສົບປາກທີ່ຍອມຮັບຮູ້ພຣະນາມຂອງພຣະອົງ
16 ແຕ່ທີ່ຈະທຳຄຸນຄວາມດີແລະມີໃຈເຜື່ອແຜ່ຊຶ່ງກັນແລະກັນນັ້ນ ຢ່າໄດ້ລືມເສັຽ ເພາະເຄື່ອງບູຊາຢ່າງນີ້ແຫລະ, ເປັນທີ່
ພໍພຣະທັຍພຣະເຈົ້າ
17 ທ່ານທັງຫລາຍຈົ່ງຍອມຟັງແລະຍອມຢູ່ໃນໂອວາດຜູ້ນຳຂອງພວກທ່ານ ເພາະເຂົາເຫລົ່ານັ້ນດູແລຈິດວິນຍານຂອງ
ພວກທ່ານຢູ່ ເໝືອນນຶ່ງຜູ້ທີ່ຈະຕ້ອງສເນີຣາຍງານ ເພື່ອເຂົາຈະໄດ້ເຮັດງານນີ້ດ້ວຍຄວາມຊື່ນໃຈ ບໍ່ແມ່ນດ້ວຍຄວາມ
ເສົ້າໃຈ ຊຶ່ງຈະບໍ່ເປັນປໂຍດແກ່ທ່ານທັງຫລາຍ

18 ຈົ່ງອ້ອນວອນເພື່ອພວກເຮົາຢູ່ ເພາະເຮົາເຊື່ອແນ່ວ່າພວກເຮົາມີໃຈສຳນຶກຜິດແລະຊອບອັນດີຢູ່ແລ້ວ ແລະປາຖນາທີ່
ຈະດຳເນີນຊີວິດຕາມຢ່າງດີໃນທຸກສິ່ງ
19 ຂ້າພະເຈົ້າຂໍເລັ່ງຣັດພວກທ່ານຫລາຍຂຶ້ນ ໃຫ້ອ້ອນວອນຢ່າງນັ້ນ ເພື່ອຈະຊົງໂຜດໃຫ້ຂ້າພະເຈົ້າກັບຄືນໄປຢູ່ກັບພວກ
ທ່ານໂດຍໄວ

## ຄຳອວຍພອນແລະຄຳຄຳນັບອັນສຸດທ້າຍ

Benediction

20 ຂໍພຣະເຈົ້າຜູ້ຊົງໂຜດສັນຕິສຸກ ຜູ້ໄດ້ຊົງນຳພຣະເຢຊູເຈົ້າຂອງເຮົາທັງຫລາຍໃຫ້ຄືນມາຈາກຕາຍ ຄືຜູ້ຊົງເປັນຜູ້ລ້ຽງ
ແກະອົງໃຫຍ່ ດ້ວຍພຣະໂລຫິດທີ່ກ່ຽວກັບຄຳສັນຍາອັນຕັ້ງຢູ່ເປັນນິດນັ້ນ
21 ຈົ່ງຊົງກະທຳໃຫ້ທ່ານທັງຫລາຍເປັນຄົນຄົບຖ້ວນໃນການດີທຸກຢ່າງ ເພື່ອຈະໄດ້ປະຕິບັດຕາມພຣະທັຍພຣະອົງ ແລະ
ຊົງທຳງານພາຍໃນທ່ານທັງຫລາຍຕາມທີ່ຊອບໃນສາຍພຣະເນດຂອງພຣະອົງ ໂດຍທາງພຣະເຢຊູຄຣິດ ສະງ່າຣາສີມີ
ແດ່ພຣະຄຣິດສືບໆໄປເປັນນິດ ອາແມນ

Final Exhortation and Greetings

22 ພີ່ນ້ອງທັງຫລາຍເອີຍ, ຂ້າພະເຈົ້າອ້ອນວອນທ່ານທັງຫລາຍໃຫ້ພຽນຟັງຄຳເຕືອນສະຕິນີ້ ເພາະຂ້າພະເຈົ້າໄດ້ຂຽນມາ
ຫາພວກທ່ານບໍ່ຫລາຍຄຳ
23 ຈົ່ງຮູ້ວ່າຕີໂມທຽວນ້ອງຂອງເຮົາທັງຫລາຍຖືກປ່ອຍແລ້ວ ຖ້າທ່ານມາຮອດໄວ ຂ້າພະເຈົ້າຈະມາຢ້ຽມຢາມພວກທ່ານ
ພ້ອມກັບທ່ານ
24 ຂ້າພະເຈົ້າຂໍຝາກຄວາມຄຶດເຖິງມາຍັງບັນດາຜູ້ນຳຂອງພວກທ່ານ ແລະໄພ່ພົນທັງປວງຂອງພຣະເຈົ້າ ພວກພີ່ນ້ອງທີ່
ມາຈາກອີຕາເລັຽກໍຝາກຄວາມຄຶດເຖິງມາຍັງພວກທ່ານ
25 ຂໍພຣະຄຸນ ຈົ່ງສະຖິດຢູ່ກັບທ່ານທັງຫລາຍເທີ້ນ